ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ......021......./ປປທ

ນະຄອນຫຼວງວຽງຈັນ, ວັນທີ....10 ກຸມພາ 2023....

# ລັດຖະດຳລັດ
# ຂອງປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 66/ສພຊ, ລົງວັນທີ 29 ທັນວາ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 27 ມັງກອນ 2023.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 66 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 29 / 12 / 22

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ
# (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 13 ທັນວາ 2022 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງວັນທີ 29 ທັນວາ 2022.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 25 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2022

# ກົດໝາຍ
# ວ່າດ້ວຍການກວດກາລັດ (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການກວດກາລັດ ເພື່ອໃຫ້ວຽກງານດັ່ງກ່າວ ດຳເນີນຢ່າງມີ ປະສິດທິພາບ, ປະສິດທິຜົນ ແນໃສ່ເຮັດໃຫ້ອຳນາດລັດ ໂປ່ງໃສ, ເຂັ້ມແຂງ, ມີຄວາມສັກສິດໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ, ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່ ລວມທັງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 (ປັບປຸງ) ການກວດກາລັດ

ການກວດກາລັດ ແມ່ນ ການເຄື່ອນໄຫວຂອງອົງການກວດກາລັດ ໃນການ ກວດກາ, ເກັບກຳ ຂໍ້ມູນ ແລະ ຫຼັກຖານ ກ່ຽວກັບການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ, ພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບຂອງ ການຈັດຕັ້ງ ແລະ ບຸກຄົນ ຢູ່ໃນອົງການລັດ ເພື່ອພິຈາລະນາ, ຕີລາຄາ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ພ້ອມທັງສະເໜີວິທີການ ແລະ ມາດຕະການແກ້ໄຂ ໃຫ້ການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ພິຈາລະນາ ຕາມກົດໝາຍ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄຳສະເໜີ** ໝາຍເຖິງ ເອກະສານຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການກວດກາລັດ ກ່ຽວກັບການຄຸ້ມຄອງບໍລິຫານລັດ, ການນຳໃຊ້ສິດ, ການປະຕິບັດໜ້າທີ່, ຄວາມຮັບຜິດຊອບຂອງພະນັກງານ ຫຼື ການຈັດຕັ້ງ ທີ່ມີການລະເມີດກົດໝາຍ ແລະ ລະບຽບການ;

2. **ການຈັດຕັ້ງ** ໝາຍເຖິງ ກະຊວງ, ອົງການ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດສອບແຫ່ງລັດ, ຄະນະເລຂາທິການ, ກຳມາທິການ ຂອງສະພາແຫ່ງຊາດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ຄະນະເລຂາທິການ, ຄະນະກຳມະການ ຂອງສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ອົງການຈັດຕັ້ງສັງຄົມ ທີ່ນຳໃຊ້ຊັບສິນ ແລະ ງົບປະມານຂອງລັດ;

3. **ຫ້ອງການຈັດຕັ້ງຂອງເປົ້າໝາຍຖືກກວດກາ** ໝາຍເຖິງ ຫ້ອງການຈັດຕັ້ງທີ່ຮັບຜິດຊອບ ແລະ ຄຸ້ມຄອງໂດຍກົງ ເປົ້າໝາຍຖືກກວດກາ;

4. **ອົງການລັດ** ໝາຍເຖິງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ປະທານປະເທດ, ລັດຖະບານ, ອົງການປົກຄອງທ້ອງຖິ່ນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ການຈັດຕັ້ງອື່ນຂອງລັດ;

5. **ການກວດກາຕາມຜົນການກວດສອບ** ໝາຍເຖິງ ການກວດກາຕາມຄຳສະເໜີຂອງອົງການກວດສອບແຫ່ງລັດ ໃນກໍລະນີຈຳເປັນ, ຮີບດ່ວນ ຫຼື ການກວດກາ ຕາມມະຕິຂອງສະພາແຫ່ງຊາດ, ມະຕິຂອງສະພາປະຊາຊົນຂັ້ນແຂວງ ພາຍຫຼັງການຮັບຮອງເອົາຜົນການກວດສອບ;

6. **ຄະນະກວດກາ** ໝາຍເຖິງ ຄະນະທີ່ໄດ້ຮັບການແຕ່ງຕັ້ງຂອງອົງການກວດກາລັດແຕ່ລະຂັ້ນໃຫ້ດຳເນີນການກວດກາແຕ່ລະເປົ້າໝາຍ;

7. **ຄະນະກວດກາສະເພາະກິດ** ໝາຍເຖິງ ຄະນະທີ່ໄດ້ຮັບການແຕ່ງຕັ້ງຈາກການຈັດຕັ້ງທີ່ມີສິດອຳນາດ ໃຫ້ດຳເນີນການກວດກາຕາມ ມະຕິ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ໂດຍມີຫຼາຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມດຳເນີນການກວດກາ;

8. **ຂັ້ນກະຊວງ** ໝາຍເຖິງ ກະຊວງ, ອົງການ, ຄະນະເລຂາທິການ ແລະ ກຳມາທິການ ຂອງສະພາແຫ່ງຊາດ;

9. **ພະແນກການຂັ້ນແຂວງ** ໝາຍເຖິງ ພະແນກການ, ອົງການຂັ້ນແຂວງ, ຄະນະເລຂາທິການ ແລະ ຄະນະກຳມະການ ຂອງສະພາປະຊາຊົນຂັ້ນແຂວງ;

10. **ຜູ້ໄດ້ຮັບມອບສິດຈາກທາງການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທີ່ໄດ້ຮັບການແຕ່ງຕັ້ງມອບໝາຍໃຫ້ເຮັດໜ້າທີ່ທາງການໃດໜຶ່ງ ຫຼື ເຊັນສັນຍາ ທີ່ຕິດພັນກັບຊັບສິນ ແລະ ງົບປະມານຂອງລັດ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານກວດກາລັດ**

ລັດ ສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານກວດກາລັດ ດ້ວຍການວາງນະໂຍບາຍ, ກົດໝາຍ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ, ເຕັກນິກ, ເຕັກໂນໂລຊີ ແລະ ອາຄານສະຖານທີ່ເຮັດວຽກ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ມີຄວາມໂປ່ງໃສ, ເຂັ້ມແຂງ, ໜັກແໜ້ນ, ຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ.

ລັດ ຊຸກຍູ້, ສົ່ງເສີມ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງ ເຂົ້າຮ່ວມໃນວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານກວດກາລັດ**

ການເຄື່ອນໄຫວວຽກງານກວດກາລັດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
2. ຮອບດ້ານ, ຄົບຖ້ວນ, ພາວະວິໄສ, ມີປະຊາທິປະໄຕ ແລະ ມີຄວາມໂປ່ງໃສ;
3. ຮັບປະກັນ ຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍ ຕາມລະບຽບການ;
4. ມີສ່ວນຮ່ວມຂອງການຈັດຕັ້ງທຸກຂັ້ນ ລວມທັງສື່ມວນຊົນ ແລະ ພົນລະເມືອງ;
5. ດຳເນີນການກວດກາ ບໍ່ໃຫ້ເປັນອຸປະສັກ ຕໍ່ການເຄື່ອນໄຫວວຽກງານປົກກະຕິຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ;
6. ມີບົດບັນທຶກກ່ຽວກັບການກວດກາຕົວຈິງແຕ່ລະຄັ້ງ.

**ມາດຕາ 6 (ປັບປຸງ) ຄວາມຮັບຜິດຊອບກ່ຽວກັບວຽກງານກວດກາລັດ**

ປະທານປະເທດ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານສະພາປະຊາຊົນຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ເຈົ້ານະຄອນ ມີໜ້າທີ່ຈັດຕັ້ງ, ຊີ້ນຳ, ສ້າງເງື່ອນໄຂອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານກວດກາລັດ ໂດຍສະເພາະການອະນຸມັດ ແຜນການ, ແຜນງານ, ໂຄງການການກວດກາລັດ, ການແກ້ໄຂຜົນການກວດກາ ແລະ ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ປະທານອົງການກວດກາລັດແຕ່ລະຂັ້ນ, ຫົວໜ້າຄະນະກວດກາ ຫຼື ຫົວໜ້າຄະນະກວດກາສະເພາະກິດ, ພະນັກງານ-ລັດຖະກອນກວດກາລັດ ຕ້ອງນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ຕ້ອງຮັບຜິດຊອບຕໍ່ການປະຕິບັດໜ້າທີ່, ການຕົກລົງ ຫຼື ການກະທຳຂອງຕົນທີ່ບໍ່ຖືກຕ້ອງຕາມກົດໝາຍ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຖືກກວດກາ.

**ມາດຕາ 7 (ປັບປຸງ) ສິດ ແລະ ພັນທະ ເຂົ້າຮ່ວມວຽກງານກວດກາລັດ**

ບັນດາອົງການຈັດຕັ້ງຂອງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ, ພົນລະເມືອງ ມີ ສິດ ແລະ ພັນທະ ເຂົ້າຮ່ວມວຽກງານກວດກາລັດ ດ້ວຍການອຳນວຍຄວາມສະດວກ, ລາຍງານ, ສະໜອງຂໍ້ມູນ, ຫຼັກຖານ ຢ່າງຖືກຕ້ອງ ແລະ ທັນການ, ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດການຕົກລົງ ກ່ຽວກັບການແກ້ໄຂຜົນການກວດກາ ແລະ ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ໃຫ້ສຳເລັດ.

**ມາດຕາ 8 (ປັບປຸງ) ການປົກປ້ອງຜູ້ເຂົ້າຮ່ວມໃນວຽກງານກວດກາລັດ**

ພະນັກງານ-ລັດຖະກອນກວດກາລັດ, ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນ, ພະຍານ, ຜູ້ຊ່ຽວຊານ ແລະ ບຸກຄົນອື່ນທີ່ເຂົ້າຮ່ວມໃນວຽກງານກວດກາ ຕ້ອງໄດ້ຮັບການປົກປ້ອງ ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ, ຊັບສິນ ຂອງຜູ້ຖືກກວດກາ ຫຼື ຜູ້ອື່ນ ໂດຍການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຫົວໜ້າຂອງຕົນ ຕາມກົດໝາຍ.

**ມາດຕາ 9 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ການຈັດຕັ້ງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ, ນາຍບ້ານ, ຮອງນາຍບ້ານ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ທີ່ປະຕິບັດໜ້າທີ່ຢູ່ອົງການຈັດຕັ້ງຂອງລັດ ແຕ່ສູນກາງ ລົງຮອດທ້ອງຖິ່ນ ແລະ ວິສາຫະກິດ ທີ່ດຳເນີນທຸລະກິດຢູ່ພາຍໃນ ແລະ ຕ່າງປະເທດ ລວມທັງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຂອງຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳເນີນທຸລະກິດ ຢູ່ ສປປ ລາວ ທີ່ພົວພັນກັບການສໍ້ລາດບັງຫຼວງ ແລະ ການຟອກເງິນ.

**ມາດຕາ 10 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດກາລັດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ຈັດສຳມະນາ, ຍົກລະດັບຄວາມຮູ້ ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານກວດກາລັດ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ, ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

# ພາກທີ II
# ການເຄື່ອນໄຫວການກວດກາລັດ
## ໝວດທີ 1
## ບ່ອນອີງ, ຮູບການ, ເປົ້າໝາຍ, ເນື້ອໃນ ແລະ ກຳນົດເວລາ ຂອງການກວດກາລັດ

**ມາດຕາ 11 (ປັບປຸງ) ບ່ອນອີງໃນການອອກຂໍ້ຕົກລົງກວດກາລັດ**

ການອອກຂໍ້ຕົກລົງກວດກາລັດ ອີງໃສ່:

1. ແຜນການ, ແຜນງານ, ໂຄງການ ກວດກາ;
2. ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
3. ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຂອງອົງການລັດ;
4. ຜົນການກວດສອບ ຕາມຄຳສະເໜີຂອງອົງການກວດສອບແຫ່ງລັດ ໃນກໍລະນີຈຳເປັນ, ຮີບດ່ວນ;
5. ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
6. ການພົບເຫັນການລະເມີດກົດໝາຍ.

**ມາດຕາ 12 (ປັບປຸງ) ຮູບການການກວດກາລັດ**

ການກວດກາລັດ ມີ ສາມຮູບການ ດັ່ງນີ້:

1. ການກວດກາແບບປົກກະຕິ ຊຶ່ງແມ່ນ ການກວດກາ ຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຂອງອົງການກວດກາລັດແຕ່ລະຂັ້ນ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
2. ການກວດກາ ຕາມຄຳສັ່ງ ຫຼື ຄຳສະເໜີ ຊຶ່ງແມ່ນ ການກວດກາຕາມ ມະຕິ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຂອງຫົວໜ້າອົງການລັດ, ຫົວໜ້າອົງການກວດກາລັດແຕ່ລະຂັ້ນ ແລະ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາ ຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

**ມາດຕາ 13 (ປັບປຸງ) ເປົ້າໝາຍຖືກກວດກາ**

ເປົ້າໝາຍຖືກກວດກາ ມີ ດັ່ງນີ້:

1. ກະຊວງ, ອົງການ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດສອບແຫ່ງລັດ, ຄະນະເລຂາທິການ, ກຳມາທິການ ຂອງສະພາແຫ່ງຊາດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ຄະນະເລຂາທິການ, ຄະນະກຳມະການ ຂອງສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ອົງການຈັດຕັ້ງສັງຄົມ ທີ່ນຳໃຊ້ຊັບສິນ ແລະ ງົບປະມານຂອງລັດ;
2. ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ, ບຸກຄົນ, ນິຕິບຸກຄົນ, ນາຍບ້ານ, ຮອງນາຍບ້ານ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ທີ່ປະຕິບັດໜ້າທີ່ຢູ່ອົງການຈັດຕັ້ງຂອງລັດແຕ່ສູນກາງ ລົງຮອດທ້ອງຖິ່ນ ແລະ ວິສາຫະກິດ ທີ່ດຳເນີນທຸລະກິດຢູ່ພາຍໃນ ແລະ ຕ່າງປະເທດ ລວມທັງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຂອງຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳເນີນທຸລະກິດ ຢູ່ ສປປ ລາວ ທີ່ພົວພັນກັບການສໍ້ລາດບັງຫຼວງ ແລະ ການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ.

**ມາດຕາ 14 (ປັບປຸງ) ເນື້ອໃນການກວດກາລັດ**

ການກວດກາລັດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານຂອງອົງການລັດ;

2. ການປະຕິບັດລະບຽບການດ້ານວິຊາສະເພາະ, ເຕັກນິກ, ຫຼັກການຄຸ້ມຄອງຂອງຂະແໜງການ;

3. ຜົນການກວດສອບ ຕາມຄໍາສະເໜີຂອງອົງການກວດສອບແຫ່ງລັດ ໃນກໍລະນີຈໍາເປັນ, ຮີບດ່ວນ, ຕາມມະຕິກອງປະຊຸມຂອງສະພາແຫ່ງຊາດ, ມະຕິກອງປະຊຸມຂອງສະພາປະຊາຊົນຂັ້ນແຂວງ.

**ມາດຕາ 15 (ປັບປຸງ) ກໍານົດເວລາດໍາເນີນການກວດກາ**

ກໍານົດເວລາດໍາເນີນການກວດກາ ມີ ດັ່ງນີ້:

1. ອົງການກວດກາແຫ່ງລັດ ກວດກາແຕ່ລະເປົ້າໝາຍ ບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ວັນດໍາເນີນການກວດກາ ເປັນຕົ້ນໄປ, ຖ້າຫາກການກວດກາບໍ່ສໍາເລັດ ກໍສາມາດຕໍ່ເວລາໄດ້ອີກ ສາມສິບວັນ, ໃນກໍລະນີມີຄວາມຫຍຸ້ງຍາກເປັນພິເສດ ຊຶ່ງພົວພັນເຖິງຫຼາຍຂະແໜງການ, ຫຼາຍທ້ອງຖິ່ນ ກໍສາມາດຕໍ່ເວລາໄດ້ອີກແຕ່ທັງໝົດບໍ່ໃຫ້ເກີນ ຮ້ອຍແປດສິບວັນ;

2. ອົງການກວດກາລັດຂັ້ນກະຊວງ ແລະ ອົງການກວດກາລັດຂັ້ນແຂວງ ກວດກາແຕ່ລະເປົ້າໝາຍ ບໍ່ໃຫ້ເກີນ ຫົກສິບວັນ ນັບແຕ່ວັນດໍາເນີນການກວດກາ ເປັນຕົ້ນໄປ, ຖ້າຫາກການກວດກາບໍ່ສໍາເລັດ ກໍສາມາດຕໍ່ເວລາໄດ້ອີກ ສາມສິບວັນ;

3. ອົງການກວດກາລັດຂອງພະແນກການຂັ້ນແຂວງ ແລະ ອົງການກວດກາລັດຂັ້ນເມືອງ ກວດກາແຕ່ລະເປົ້າໝາຍ ບໍ່ໃຫ້ເກີນ ສາມສິບວັນ ນັບແຕ່ວັນດໍາເນີນການກວດກາ ເປັນຕົ້ນໄປ, ຖ້າຫາກການກວດກາບໍ່ສໍາເລັດ ກໍສາມາດຕໍ່ເວລາໄດ້ອີກ ສິບຫ້າວັນ.

ສໍາລັບໜ່ວຍງານກວດກາລັດຂັ້ນເມືອງນັ້ນ ການກວດກາແຕ່ລະເປົ້າໝາຍ ບໍ່ໃຫ້ເກີນ ສິບຫ້າວັນ ນັບແຕ່ວັນດໍາເນີນການກວດກາ ເປັນຕົ້ນໄປ, ຖ້າຫາກການກວດກາບໍ່ສໍາເລັດ ກໍສາມາດຕໍ່ເວລາໄດ້ອີກ ສິບຫ້າວັນ.

## ໝວດທີ 2
## ຂັ້ນຕອນ ຂອງການກວດກາລັດ

**ມາດຕາ 16 ຂັ້ນຕອນ ຂອງການກວດກາລັດ**

ການກວດກາລັດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຕົກລົງໃຫ້ກວດກາ;
2. ການກະກຽມແຜນການກວດກາ;
3. ການດໍາເນີນການກວດກາ;
4. ການສະຫຼຸບຜົນການກວດກາ;
5. ການລາຍງານຜົນການກວດກາ.

**ມາດຕາ 17 (ປັບປຸງ) ການຕົກລົງໃຫ້ກວດກາ**

ຜູ້ທີ່ມີສິດຕົກລົງໃຫ້ກວດກາ ມີ ດັ່ງນີ້:

1. ປະທານປະເທດ;
2. ປະທານສະພາແຫ່ງຊາດ;
3. ນາຍົກລັດຖະມົນຕີ;

4. ປະທານອົງການກວດກາລັດແຕ່ລະຂັ້ນ;

5. ລັດຖະມົນຕີ, ຫົວໜ້າອົງການ;

6. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານສະພາປະຊາຊົນຂັ້ນແຂວງ;

7. ຫົວໜ້າກົມກວດກາລັດຂັ້ນກະຊວງ;

8. ຫົວໜ້າພະແນກການຂັ້ນແຂວງ;

9. ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

**ມາດຕາ 18 (ປັບປຸງ) ການກະກຽມການກວດກາ**

ການກະກຽມການກວດກາ ໃຫ້ປະຕິບັດ ດັ່ງນີ້:

1. ແຕ່ງຕັ້ງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ;

2. ເກັບກຳຂໍ້ມູນ, ຫຼັກຖານ, ເອກະສານ ເພື່ອຄົ້ນຄວ້າ, ວິເຄາະ, ວິໄຈ, ກຳນົດຈຸດປະສົງ, ຄາດໝາຍ, ເນື້ອໃນ, ເປົ້າໝາຍຂອງການກວດກາ;

3. ສ້າງແຜນການກວດກາລະອຽດ, ຮ່າງຄຳຖາມເຈາະຈີ້ມ ເພື່ອໃຫ້ເປົ້າໝາຍຖືກກວດກາລາຍງານ;

4. ກະກຽມນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບການກວດກາ, ງົບປະມານ, ພາຫະນະ, ວັດຖຸປະກອນ, ເຄື່ອງມືຮັບໃຊ້ທີ່ຈຳເປັນ;

5. ໃຫ້ຄຳແນະນຳພະນັກງານ-ລັດຖະກອນ ທີ່ຈະລົງກວດກາ ເພື່ອກຳແໜ້ນຈຸດປະສົງ, ຄາດໝາຍ, ເນື້ອໃນການກວດກາ, ລະບຽບການ ພາຍໃນຂອງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ແລະ ແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະຄົນໃນຄະນະກວດກາດັ່ງກ່າວ;

6. ປະສານສົມທົບກັບການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ກ່ຽວກັບ ຈຸດປະສົງ, ເປົ້າໝາຍ, ຄາດໝາຍ, ເນື້ອໃນ, ກຳນົດເວລາ, ສະຖານທີ່ເຮັດວຽກ, ແນະນຳການກະກຽມບົດລາຍງານ ຕາມຄຳຖາມເຈາະຈີ້ມ ແລະ ບັນຫາອື່ນທີ່ກ່ຽວຂ້ອງ.

**ມາດຕາ 19 (ປັບປຸງ) ການດຳເນີນການກວດກາ**

ການດຳເນີນການກວດກາ ຕ້ອງປະຕິບັດ ດັ່ງນີ້:

1. ເຂົ້າພົບຫົວໜ້າການຈັດຕັ້ງຂັ້ນເທິງ ແລະ ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ເພື່ອແຈ້ງຂໍ້ຕົກລົງ, ຈຸດປະສົງ, ແຜນການເຄື່ອນໄຫວດຳເນີນການກວດກາ;

2. ດຳເນີນການກວດກາຕາມແຜນການ ເປັນຕົ້ນ ເກັບກຳຂໍ້ມູນ, ຫຼັກຖານ, ຮັບຟັງການລາຍງານ ຂອງເປົ້າໝາຍຖືກກວດກາ, ມອບຮັບເອກະສານ, ຂໍ້ມູນ, ຫຼັກຖານ ທີ່ພົວພັນກັບເນື້ອໃນການກວດກາ;

3. ຮຽກ ແລະ ເຊີນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ແມ່ນເປົ້າໝາຍຖືກກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງ ມາລາຍງານ, ຊີ້ແຈງ, ອະທິບາຍ ພ້ອມທັງສະໜອງເອກະສານ, ຂໍ້ມູນ ແລະ ຫຼັກຖານ ທີ່ກ່ຽວຂ້ອງ;

4. ກວດພິສູດຂໍ້ມູນ, ຫຼັກຖານ ທີ່ເກັບກຳໄດ້ ເພື່ອເປັນບ່ອນອີງໃຫ້ແກ່ການຕີລາຄາ ແລະ ສະຫຼຸບຜົນການກວດກາ;

5. ເຮັດບົດບັນທຶກ ການເກັບກຳຂໍ້ມູນ, ຫຼັກຖານ, ການກວດກາຕົວຈິງ ແລະ ການຈັດກອງປະຊຸມແຕ່ລະຄັ້ງ;

6. ລາຍງານ ແລະ ຂໍທິດຊີ້ນຳ ກ່ຽວກັບການດຳເນີນການກວດກາ ໃນແຕ່ລະໄລຍະຈາກຂັ້ນເທິງຂອງຕົນ.

**ມາດຕາ 20 (ປັບປຸງ) ການສະຫຼຸບຜົນການກວດກາ**

ການສະຫຼຸບຜົນການກວດກາ ຕ້ອງປະຕິບັດ ດັ່ງນີ້:

1. ສັງລວມບັນດາເອກະສານ, ຂໍ້ມູນ, ຫຼັກຖານຕ່າງໆ, ບົດບັນທຶກ ທີ່ໄດ້ກວດກາ ເພື່ອເປັນຂໍ້ມູນໃຫ້ແກ່ການສະຫຼຸບຜົນການກວດກາ;

2. ຕີລາຄາ, ໄຈ້ແຍກໃຫ້ລະອຽດຈະແຈ້ງ ກ່ຽວກັບການລະເມີດກົດໝາຍຂອງເປົ້າໝາຍຖືກກວດກາ, ຈັດລະດັບຄວາມຮັບຜິດຊອບຕໍ່ການກະທຳຜິດ ແລະ ຄວາມເສຍຫາຍ ຕາມກໍລະນີເບົາ ຫຼື ໜັກ ພ້ອມທັງສະເໜີວິທີການ, ມາດຕະການແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ສົ່ງຮ່າງບົດສະຫຼຸບຜົນການກວດກາໃຫ້ຫົວໜ້າການຈັດຕັ້ງຂັ້ນເທິງ ແລະ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ເພື່ອພິຈາລະນາ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບເປັນຕົ້ນໄປ;

4. ໃຫ້ຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ແລະ ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາລົງລາຍເຊັນໃສ່ບົດສະຫຼຸບ ເພື່ອຢັ້ງຢືນຜົນການກວດກາ.

**ມາດຕາ 21 ການລາຍງານຜົນການກວດກາ**

ພາຍຫຼັງສຳເລັດການກວດກາ ຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ຕ້ອງສົ່ງບົດສະຫຼຸບ ແລະ ລາຍງານຜົນການກວດກາຕໍ່ຜູ້ຕົກລົງໃຫ້ກວດກາ ເພື່ອພິຈາລະນາ ແລະ ຕົກລົງແກ້ໄຂ.

## ໝວດທີ 3
## ຄະນະກວດກາ ແລະ ຄະນະກວດກາສະເພາະກິດ

**ມາດຕາ 22 (ປັບປຸງ) ການແຕ່ງຕັ້ງຄະນະກວດກາ**

ປະທານອົງການກວດກາລັດແຕ່ລະຂັ້ນ ແຕ່ງຕັ້ງຄະນະກວດກາ ຊຶ່ງປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າຄະນະ ແລະ ພະນັກງານ-ລັດຖະກອນກວດກາລັດ ຈຳນວນໜຶ່ງ ເປັນກຳມະການ ເພື່ອດຳເນີນການກວດກາແຕ່ລະຄັ້ງ.

ການເຄື່ອນໄຫວ ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງຄະນະກວດກາ ໃນການກວດກາຕໍ່ແຕ່ລະເປົ້າໝາຍຖືກກວດກາ ສິ້ນສຸດລົງພາຍຫຼັງການກວດກາສຳເລັດ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງຄະນະກວດກາ**

ຄະນະກວດກາ ມີ ສິດ ແລະ ໜ້າທີ່ ກະກຽມ, ດຳເນີນການກວດກາ, ສະຫຼຸບ ແລະ ລາຍງານຜົນການກວດກາຕໍ່ຜູ້ຕົກລົງໃຫ້ກວດກາ ພິຈາລະນາ ແລະ ຕົກລົງແກ້ໄຂຜົນການກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ແລະ 29 ຂອງກົດໝາຍສະບັບນີ້.

**ມາດຕາ 24 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າຄະນະກວດກາ**

ຫົວໜ້າຄະນະກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງ, ຊີ້ນຳກຳມະການໃນຄະນະກວດກາ ປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງ, ຄາດໝາຍ, ເນື້ອໃນ ແລະ ກຳນົດເວລາການກວດກາ;

2. ສະເໜີໃຫ້ເປົ້າໝາຍຖືກກວດກາ ສະໜອງຂໍ້ມູນ, ເອກະສານ, ລາຍງານເປັນລາຍລັກອັກສອນ ແລະ ອະທິບາຍກ່ຽວກັບບັນຫາທີ່ພົວພັນກັບເນື້ອໃນການກວດກາ. ໃນກໍລະນີຈຳເປັນ ອາດດຳເນີນການກວດກາລົງເລິກສະເພາະ ແລະ ຂຶ້ນບັນຊີຊັບສິນຂອງເປົ້າໝາຍຖືກກວດກາ;

3. ສະເໜີຄຳເຫັນຕໍ່ຜູ້ຕົກລົງໃຫ້ກວດກາ ນຳໃຊ້ມາດຕະການຕໍ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ໃຫ້ການຮ່ວມມື ເພື່ອຮັບປະກັນການປະຕິບັດໜ້າທີ່ ຂອງຄະນະກວດກາ;

4. ສະເໜີໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ສະໜອງຂໍ້ມູນ, ເອກະສານ ທີ່ພົວພັນກັບເນື້ອໃນການກວດກາ;

5. ຕິກລົງຍຶດ ຫຼື ອາຍັດເອກະສານ ແລະ ຊັບສິນ ຂອງເປົ້າໝາຍຖືກກວດກາ ເມື່ອມີຫຼັກຖານຢັ້ງຢືນວ່າມີການກະທຳຜິດ ຫຼື ລະເມີດກົດໝາຍ ເພື່ອປ້ອງກັນບໍ່ໃຫ້ມີການປອມແປງ ຫຼື ທຳລາຍເອກະສານ, ຫຼັກຖານ ແລະ ຊັບສິນຖືກປ່ຽນຮູບເປັນຢ່າງອື່ນ;

6. ສະເໜີໃຫ້ການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາໂຈະຊົ່ວຄາວ ການປະຕິບັດໜ້າທີ່, ການຍົກຍ້າຍໜ້າທີ່, ການຮັບບຳນານ ແລະ ອື່ນໆ ຕໍ່ຜູ້ຖືກກວດກາ ຫຼື ຜູ້ຮ່ວມງານທີ່ເຫັນວ່າຈະເປັນອຸປະສັກໃນການກວດກາ ຊຶ່ງຈະສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແກ່ຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

7. ລາຍງານຕໍ່ຜູ້ຕົກລົງໃຫ້ກວດກາ ກ່ຽວກັບຜົນການກວດກາ ແລະ ຕ້ອງຮັບຜິດຊອບກ່ຽວກັບບົດລາຍງານດັ່ງກ່າວ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງຮອງຫົວໜ້າ ແລະ ກຳມະການ ຄະນະກວດກາ**

ຮອງຫົວໜ້າ ແລະ ກຳມະການ ຄະນະກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດວຽກງານຕາມການມອບໝາຍ ແລະ ການແບ່ງງານ ຂອງຫົວໜ້າຄະນະກວດກາ;

2. ປະກອບຄຳເຫັນຕໍ່ບົດສະຫຼຸບ, ບົດລາຍງານຜົນການກວດກາ;

3. ສະຫຼຸບ ແລະ ລາຍງານ ກ່ຽວກັບການເຄື່ອນໄຫວກວດກາ ຕໍ່ຫົວໜ້າຄະນະກວດກາຢ່າງເປັນປະຈຳ;

4. ຮັບຜິດຊອບຕໍ່ກົດໝາຍ ແລະ ຕໍ່ຫົວໜ້າຄະນະກວດກາ ກ່ຽວກັບການປະຕິບັດໜ້າທີ່ຂອງຕົນໃນການກວດກາ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 (ປັບປຸງ) ການແຕ່ງຕັ້ງຄະນະກວດກາສະເພາະກິດ**

ປະທານປະເທດ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ປະທານອົງການກວດກາແຫ່ງລັດ, ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານສະພາປະຊາຊົນຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງຄະນະກວດກາສະເພາະກິດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອດຳເນີນການກວດກາບັນຫາໃດໜຶ່ງ ທີ່ພົວພັນເຖິງຫຼາຍພາກສ່ວນ ແລະ ມີຄວາມຫຍຸ້ງຍາກ.

ຄະນະກວດກາສະເພາະກິດ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານ-ລັດຖະກອນກວດກາລັດ ຈາກພາກສ່ວນອື່ນທີ່ກ່ຽວຂ້ອງຈຳນວນໜຶ່ງ ເປັນກຳມະການ.

ໃນກໍລະນີຈຳເປັນ ອາດແຕ່ງຕັ້ງຜູ້ຊ່ຽວຊານສະເພາະດ້ານ ເຂົ້າຮ່ວມໃນຄະນະກວດກາສະເພາະກິດກໍໄດ້.

ການເຄື່ອນໄຫວ ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງຄະນະກວດກາສະເພາະກິດ ໃນການກວດກາຕໍ່ແຕ່ລະເປົ້າໝາຍຖືກກວດກາ ສິ້ນສຸດລົງພາຍຫຼັງການກວດກາສຳເລັດ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຄະນະກວດກາສະເພາະກິດ**

ຄະນະກວດກາສະເພາະກິດ, ຫົວໜ້າ, ຮອງຫົວໜ້າ ແລະ ກຳມະການ ຄະນະກວດກາສະເພາະກິດນຳໃຊ້ສິດ ແລະ ປະຕິບັດໜ້າທີ່ດັ່ງດຽວກັນກັບຄະນະກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23, 24 ແລະ 25 ຂອງກົດໝາຍສະບັບນີ້.

## ໝວດທີ 4
## ການພິຈາລະນາ ແລະ ແກ້ໄຂຜົນການກວດກາ

**ມາດຕາ 28 (ປັບປຸງ) ການພິຈາລະນາຜົນການກວດກາ**

ຜູ້ຕົກລົງໃຫ້ກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້ ຕ້ອງພິຈາລະນາຜົນການກວດກາ ໃຫ້ສຳເລັດພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບບົດສະຫຼຸບ ແລະ ບົດລາຍງານຜົນການກວດກາ ເປັນຕົ້ນໄປ. ໃນກໍລະນີການຄົ້ນຄວ້າພິຈາລະນາຜົນການກວດກາ ຫາກພົວພັນເຖິງຫຼາຍພາກສ່ວນ ແລະ ມີຄວາມຫຍຸ້ງຍາກ ກໍສາມາດຕໍ່ເວລາໄດ້ຕື່ມ ຫ້າວັນ ລັດຖະການ ແລະ ແຈ້ງຜົນການພິຈາລະນານັ້ນ ໃຫ້ຫົວໜ້າການຈັດຕັ້ງຂັ້ນເທິງ ແລະ ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາ ພາຍໃນເວລາ ເຈັດວັນ ລັດຖະການ ເພື່ອກະກຽມ ແລະ ຈັດຕັ້ງປະຕິບັດຜົນການກວດກາ.

ໃນກໍລະນີມີການລະເມີດກົດໝາຍ ໃນສະຖານເບົາ, ສ້າງຄວາມເສຍຫາຍບໍ່ຫຼວງຫຼາຍນັ້ນ ຜູ້ຕົກລົງໃຫ້ກວດກາ ຕ້ອງສະເໜີໃຫ້ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາແກ້ໄຂຕາມມາດຕະການທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ໃນກໍລະນີມີການລະເມີດທາງແພ່ງ ອົງການກວດກາລັດ ຕ້ອງສົ່ງສຳນວນເອກະສານກວດກາໃຫ້ພາກສ່ວນທີ່ຖືກເສຍຫາຍ ຫຼື ອົງການໄອຍະການປະຊາຊົນ ຮ້ອງຟ້ອງຕໍ່ສານປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

ໃນກໍລະນີມີການກະທຳຜິດທາງອາຍາ ທີ່ບໍ່ແມ່ນພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ອົງການກວດກາລັດຕ້ອງສົ່ງສຳນວນເອກະສານກວດກາໃຫ້ອົງການສືບສວນ-ສອບສວນອື່ນທີ່ກ່ຽວຂ້ອງ ເພື່ອດຳເນີນຄະດີຕາມກົດໝາຍ.

ສຳລັບການກະທຳຜິດ ທີ່ແມ່ນພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ມອບໃຫ້ອົງການສືບສວນ-ສອບສວນຄະດີສໍ້ລາດບັງຫຼວງ ດຳເນີນຄະດີຕາມກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 29 (ປັບປຸງ) ການແກ້ໄຂຜົນການກວດກາ**

ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ມີໜ້າທີ່ ແລະ ຄວາມຮັບຜິດຊອບຈັດຕັ້ງ ແລະ ແກ້ໄຂຜົນການກວດກາແລ້ວ ຕ້ອງຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ, ເດັດຂາດ, ທັນການ ໃຫ້ສຳເລັດພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຂໍ້ຕົກລົງດັ່ງກ່າວ ເປັນຕົ້ນໄປ ແລ້ວລາຍງານຕໍ່ຜູ້ຕົກລົງໃຫ້ກວດກາ ພາຍໃນເວລາ ສິບຫ້າວັນ.

ໃນກໍລະນີ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ຫາກແກ້ໄຂຜົນການກວດກາຊັກຊ້າ ໂດຍບໍ່ມີເຫດຜົນ ຫຼື ແກ້ໄຂບໍ່ຖືກຕ້ອງຕາມຂໍ້ຕົກລົງດັ່ງກ່າວ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ກໍຈະຖືກລົງວິໄນ ດ້ວຍການຕິຕຽນ, ກ່າວເຕືອນ ໂດຍໃຫ້ຂຽນໃບສຳຫຼວດຕົນເອງ ແລະ ບັນທຶກຄວາມຜິດໄວ້ເປັນຫຼັກຖານ.

ໃນກໍລະນີ ຫາກບໍ່ແກ້ໄຂຜົນການກວດກາ ໂດຍບໍ່ມີເຫດຜົນ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ຈະຖືກລົງວິໄນ ດ້ວຍການໂຈະການເລື່ອນຂັ້ນເງິນເດືອນ ແລະ ການຍ້ອງຍໍ; ຫຼຸດຕຳແໜ່ງບໍລິຫານ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ; ປົດຕຳແໜ່ງບໍລິຫານ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງພະນັກງານ-ລັດຖະກອນ ຫຼື ເອົາອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດ ແລະ ດຳເນີນຄະດີຕາມກົດໝາຍ.

**ມາດຕາ 30 (ປັບປຸງ) ການຕິດຕາມ, ຊຸກຍູ້, ກວດກາ ການແກ້ໄຂຜົນການກວດກາ**

ການຕິດຕາມ, ຊຸກຍູ້, ກວດກາ ການແກ້ໄຂຜົນການກວດກາ ຂອງອົງການລັດຂັ້ນໃດ ແມ່ນ ຄວາມຮັບຜິດຊອບຂອງອົງການກວດກາລັດຂັ້ນນັ້ນ ເປັນຜູ້ຕິດຕາມ, ຊຸກຍູ້, ກວດກາ ໂດຍກົງ. ຜ່ານການ ຕິດຕາມ, ຊຸກຍູ້,

ກວດກາ ຖ້າເຫັນວ່າຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ບໍ່ແກ້ໄຂ ຫຼື ມີການແກ້ໄຂບໍ່ຖືກຕ້ອງຕາມຂໍ້ຕົກລົງແກ້ໄຂຜົນການກວດກາ ອົງການກວດກາລັດຂັ້ນນັ້ນ ມີສິດສະເໜີຕໍ່ຜູ້ຕົກລົງໃຫ້ແກ້ໄຂຜົນການກວດກາ ຊີ້ນຳໃຫ້ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາແກ້ໄຂ ຫຼື ແກ້ໄຂຄືນ, ຖ້າຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ຫາກບໍ່ປະຕິບັດ ກໍໃຫ້ນຳໃຊ້ມາດຕະການ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້.

**ມາດຕາ 31 (ປັບປຸງ) ການເປີດເຜີຍຜົນການກວດກາ**

ຜົນການກວດກາທີ່ຖືກຮັບຮອງ ແລະ ໄດ້ຮັບອະນຸຍາດຈາກຜູ້ຕົກລົງໃຫ້ກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້ ສາມາດເປີດເຜີຍ ດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ແຈ້ງຜົນການກວດກາໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ;
2. ແຈ້ງຜົນການກວດກາໃຫ້ທົ່ວສັງຄົມ ຕາມຄວາມເໝາະສົມ;
3. ແຈ້ງຜົນການກວດກາດ້ວຍຮູບການອື່ນ.

**ມາດຕາ 32 (ປັບປຸງ) ການເກັບຮັກສາເອກະສານ ກ່ຽວກັບການກວດກາ**

ເອກະສານ ກ່ຽວກັບການກວດກາ ຕ້ອງເກັບຮັກສາໄວ້ ຢ່າງໜ້ອຍ ສິບປີ.

ສຳລັບລາຍລະອຽດຂອງການເກັບຮັກສາເອກະສານນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ III
## ອົງການກວດກາລັດ
### ໝວດທີ 1
### ລະບົບການຈັດຕັ້ງ ຂອງອົງການກວດກາລັດ

**ມາດຕາ 33 (ປັບປຸງ) ອົງການກວດກາລັດ**

ອົງການກວດກາລັດ ແມ່ນ ອົງການທີ່ປະຕິບັດພາລະບົດບາດ ຕິດຕາມ, ກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 34 (ປັບປຸງ) ລະບົບການຈັດຕັ້ງ ຂອງອົງການກວດກາລັດ**

ລະບົບການຈັດຕັ້ງ ຂອງອົງການກວດກາລັດ ມີ ດັ່ງນີ້:

1. ອົງການກວດກາແຫ່ງລັດ;
2. ອົງການກວດກາລັດຂັ້ນກະຊວງ;
3. ອົງການກວດກາລັດຂັ້ນແຂວງ;
4. ອົງການກວດກາລັດຂອງພະແນກການຂັ້ນແຂວງ;
5. ອົງການກວດກາລັດຂັ້ນເມືອງ.

**ມາດຕາ 35 (ໃໝ່) ທີ່ຕັ້ງ ຂອງອົງການກວດກາລັດແຕ່ລະຂັ້ນ**

ທີ່ຕັ້ງຂອງອົງການກວດກາລັດແຕ່ລະຂັ້ນ ມີ ດັ່ງນີ້:

1. ອົງການກວດກາແຫ່ງລັດ ຊຶ່ງແມ່ນ ອົງການກວດກາລັດຂັ້ນສູນກາງ ຂຶ້ນກັບການຊີ້ນຳໂດຍກົງຂອງປະທານປະເທດ ແຫ່ງ ສປປ ລາວ;

2. ອົງການກວດກາລັດຂັ້ນກະຊວງ ຊຶ່ງແມ່ນ ກົມກວດກາລັດຂອງ ກະຊວງ, ອົງການ ຂຶ້ນກັບການຊີ້ນຳໂດຍກົງຂອງ ລັດຖະມົນຕີ, ຫົວໜ້າອົງການ;

3. ອົງການກວດກາລັດຂັ້ນແຂວງ ຊຶ່ງແມ່ນ ອົງການກວດກາລັດ ແຂວງ, ນະຄອນຫຼວງ ຂຶ້ນກັບການຊີ້ນຳໂດຍກົງຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

4. ອົງການກວດກາລັດຂອງພະແນກການຂັ້ນແຂວງ ຊຶ່ງແມ່ນ ຂະແໜງກວດກາລັດຂອງພະແນກການຂັ້ນແຂວງ ຂຶ້ນກັບການຊີ້ນຳໂດຍກົງຂອງຫົວໜ້າພະແນກການຂັ້ນແຂວງ;

5. ອົງການກວດກາລັດຂັ້ນເມືອງ ຊຶ່ງແມ່ນ ອົງການກວດກາລັດ ເມືອງ, ເທດສະບານ, ນະຄອນ ຂຶ້ນກັບເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

ໃນກໍລະນີຈຳເປັນ ກົມວິຊາການ ຫຼື ອົງການລັດທຽບເທົ່າກົມ ທີ່ຂຶ້ນກັບ ກະຊວງ, ອົງການ ແລະ ຫ້ອງການຂັ້ນເມືອງ ອາດສ້າງຕັ້ງກົງຈັກກວດກາລັດຂອງຕົນຂຶ້ນກໍໄດ້.

## ໝວດທີ 2
## ພາລະບົດບາດ ຂອງອົງການກວດກາລັດ

### ມາດຕາ 36 (ປັບປຸງ) ພາລະບົດບາດ ຂອງອົງການກວດກາແຫ່ງລັດ

ອົງການກວດກາແຫ່ງລັດ ມີພາລະບົດບາດ ເປັນເສນາທິການ ໃຫ້ປະທານປະເທດ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມຂອບເຂດສິດ, ໜ້າທີ່ຂອງຕົນ ແລະ ນຳພາ, ຊີ້ນຳ ວຽກງານດັ່ງກ່າວ ໃນຂອບເຂດທົ່ວປະເທດ.

### ມາດຕາ 37 (ປັບປຸງ) ພາລະບົດບາດ ຂອງອົງການກວດກາລັດຂັ້ນກະຊວງ

ອົງການກວດກາລັດຂັ້ນກະຊວງ ແມ່ນ ກົມກວດກາລັດຂັ້ນກະຊວງ ມີພາລະບົດບາດເປັນເສນາທິການໃຫ້ລັດຖະມົນຕີ, ຫົວໜ້າອົງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມຂອບເຂດສິດ, ໜ້າທີ່ຂອງຕົນ ແລະ ຊີ້ນຳວຽກງານດັ່ງກ່າວຕາມສາຍຕັ້ງຂອງຕົນ.

ອົງການກວດກາລັດຂັ້ນກະຊວງ ກວດກາຕາມຂະແໜງການ ແລະ ການບໍລິຫານ ກ່ຽວກັບການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ວິຊາສະເພາະ, ເຕັກນິກ ແລະ ການປະຕິບັດວຽກງານຂອງ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ ແລະ ຜູ້ໄດ້ຮັບມອບສິດຈາກທາງການທີ່ຂຶ້ນກັບການຄຸ້ມຄອງຂອງຂັ້ນກະຊວງ.

ອົງການກວດກາລັດຂັ້ນກະຊວງ ເຄື່ອນໄຫວວຽກງານພາຍໃຕ້ການຊີ້ນຳດ້ານວິຊາສະເພາະຂອງອົງການກວດກາແຫ່ງລັດ.

### ມາດຕາ 38 (ປັບປຸງ) ພາລະບົດບາດ ຂອງອົງການກວດກາລັດຂັ້ນແຂວງ

ອົງການກວດກາລັດຂັ້ນແຂວງ ມີພາລະບົດບາດ ເປັນເສນາທິການໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມຂອບເຂດສິດ, ໜ້າທີ່ຂອງຕົນ ແລະ ນຳພາ ຊີ້ນຳ ອົງການກວດກາລັດຂັ້ນເມືອງ, ຂະແໜງກວດກາລັດຂອງພະແນກການຂັ້ນແຂວງ.

### ມາດຕາ 39 (ປັບປຸງ) ພາລະບົດບາດ ຂອງອົງການກວດກາລັດຂອງພະແນກການຂັ້ນແຂວງ

ອົງການກວດກາລັດຂອງພະແນກການຂັ້ນແຂວງ ແມ່ນ ຂະແໜງກວດກາລັດ ມີພາລະບົດບາດເປັນເສນາທິການໃຫ້ຫົວໜ້າພະແນກການຂັ້ນແຂວງ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມຂອບເຂດສິດ, ໜ້າທີ່ຂອງຕົນ.

ອົງການກວດກາລັດຂອງພະແນກການຂັ້ນແຂວງ ກວດກາຕາມຂະແໜງການ ແລະ ການບໍລິຫານ ກ່ຽວກັບການປະຕິບັດ ນະໂຍບາຍ, ກົດໝາຍ, ແຜນການ, ວິຊາສະເພາະ, ເຕັກນິກ ແລະ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ ແລະ ຜູ້ໄດ້ຮັບມອບສິດຈາກທາງການທີ່ຂຶ້ນກັບການຄຸ້ມຄອງຂອງພະແນກການຕົນ.

ອົງການກວດກາລັດຂອງພະແນກການຂັ້ນແຂວງ ເຄື່ອນໄຫວວຽກງານພາຍໃຕ້ການຊີ້ນຳດ້ານວິຊາສະເພາະຂອງອົງການກວດກາລັດຂັ້ນແຂວງ ແລະ ກົມກວດກາລັດຂັ້ນກະຊວງ.

**ມາດຕາ 40 (ປັບປຸງ) ພາລະບົດບາດ ຂອງອົງການກວດກາລັດຂັ້ນເມືອງ**

ອົງການກວດກາລັດຂັ້ນເມືອງ ມີພາລະບົດບາດເປັນເສນາທິການໃຫ້ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມຂອບເຂດສິດ, ໜ້າທີ່ຂອງຕົນ ແລະ ນຳພາ ຊີ້ນຳ ໜ່ວຍງານກວດກາລັດຂອງຫ້ອງການຂັ້ນເມືອງຂອງຕົນ.

## ໝວດທີ 3
## ສິດ ແລະ ໜ້າທີ່ ຂອງອົງການກວດກາລັດ

**ມາດຕາ 41 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາແຫ່ງລັດ**

ອົງການກວດກາແຫ່ງລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອສະເໜີປະທານປະເທດ ພິຈາລະນາ;

3. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ລະອຽດຂອງອົງການຕົນ ເພື່ອຈັດຕັ້ງປະຕິບັດ;

4. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ແລະ ຊີ້ນຳ ການຈັດຕັ້ງປະຕິບັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ກວດກາການປະຕິບັດ ນະໂຍບາຍ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຂັ້ນກະຊວງ, ຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນ ທີ່ນຳໃຊ້ຊັບສິນ ແລະ ງົບປະມານຂອງລັດ;

7. ກວດກາ ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະມາຊິກລັດຖະບານ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຮອງລັດຖະມົນຕີ, ຮອງຫົວໜ້າອົງການ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ຂັ້ນສູນກາງຄຸ້ມຄອງ;

8. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການຕໍ່ຜູ້ກະທຳຜິດຕາມກົດໝາຍ;

9. ສະເໜີ ປະທານປະເທດ ຫຼື ຄະນະປະຈຳສະພາແຫ່ງຊາດ ຕົກລົງດຳເນີນການກວດກາ ຕໍ່ບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ, ພະນັກງານຂອງສະພາແຫ່ງຊາດ, ສານປະຊາຊົນສູງສຸດ,

ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການກວດສອບແຫ່ງລັດ ທີ່ຄະນະປະຈຳສະພາແຫ່ງຊາດແຕ່ງຕັ້ງ ເມື່ອມີປາກົດການລະເມີດກົດໝາຍ;

10. ສະເໜີຄະນະປະຈຳສະພາແຫ່ງຊາດ ເປີດກອງປະຊຸມລົງມະຕິບໍ່ໄວ້ວາງໃຈ ຕໍ່ບຸກຄະລາກອນ ທີ່ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ເມື່ອມີການລະເມີດກົດໝາຍ;

11. ກວດກາວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ;

12. ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຂອບເຂດ ຄວາມຮັບຜິດຊອບຂອງຕົນ;

13. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດຳເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ, ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານການສໍ້ລາດ ບັງຫຼວງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

14. ກວດກາຜົນການກວດສອບ ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳ ສະພາແຫ່ງຊາດ ແລະ ຕາມຄຳສະເໜີຂອງອົງການກວດສອບແຫ່ງລັດ;

15. ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ;

16. ພົວພັນ ແລະ ປະສານສົມທົບກັບອົງການຈັດຕັ້ງຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການ ກວດສອບແຫ່ງລັດ ແລະ ກວດສອບເອກະລາດ ກ່ຽວກັບການດຳເນີນການກວດກາ, ການແກ້ໄຂ ແລະ ການ ປະຕິບັດຜົນການກວດກາ ຕາມພາລະບົດບາດຂອງຕົນ;

17. ສະເໜີມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ການຈັດຕັ້ງຂັ້ນເທິງຂອງເປົ້າ ໝາຍຖືກກວດກາ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ປະທານປະເທດ;

18. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາຢູ່ ຂັ້ນກະຊວງ, ຂັ້ນແຂວງ ແລະ ການປະຕິບັດ ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນ ກັບການສໍ້ລາດບັງຫຼວງ;

19. ກວດກາ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດ ທີ່ມີພຶດຕິກຳໃນການເລີນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ, ຂາດຈັນຍາບັນ, ຈັນຍາທຳ ໃນວິຊາຊີບ ຊຶ່ງພາໃຫ້ເກີດຜົນເສຍຫາຍແກ່ຊັບສິນຂອງ ລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

20. ກວດກາ ການແຈ້ງຊັບສິນ ແລະ ລາຍຮັບ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດຂອງລັດ ຂັ້ນສູນກາງຄຸ້ມຄອງ;

21. ສະເໜີໂຈະຊົ່ວຄາວ ການແຕ່ງຕັ້ງ, ສັບຊ້ອນ, ການຍົກຍ້າຍ, ສັບປ່ຽນ ຫຼື ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຂັ້ນສູນກາງຄຸ້ມຄອງ ທີ່ເປັນເປົ້າໝາຍຖືກກວດກາໃນໄລຍະ ເວລາດຳເນີນການກວດກາ ຫຼື ດຳເນີນການສືບສວນ-ສອບສວນ ບໍ່ທັນສຳເລັດ ບົນພື້ນຖານການປະສານ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

22. ສະເໜີ ປະທານປະເທດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໂຈະການປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນ ການກວດກາ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ ແລະ ລົງວິໄນ ຫຼື ດຳເນີນຄະດີຕໍ່ຫົວໜ້າອົງການຈັດຕັ້ງຂອງ ເປົ້າໝາຍຖືກກວດກາ ທີ່ບໍ່ແກ້ໄຂຜົນການກວດກາ ຫຼື ແກ້ໄຂບໍ່ຖືກຕ້ອງ ຕາມການຕົກລົງຂອງຂັ້ນເທິງ;

23. ສະເໜີ ປະທານປະເທດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາແຕ່ງຕັ້ງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເພື່ອດຳເນີນການ ກວດກາ;

24. ເຂົ້າຮ່ວມຕິດຕາມ ແລະ ຊີ້ນໍາກອງປະຊຸມວຽກງານກວດກາຂອງ ກະຊວງ, ອົງການ, ແຂວງ, ນະຄອນຫຼວງ ແລະ ເຂົ້າຮ່ວມຕິດຕາມກອງປະຊຸມເປີດກວ້າງ ຂອງລັດຖະບານ ຕາມການເຊີນ;

25. ປັບປຸງການຈັດຕັ້ງ, ສ້າງ, ບໍາລຸງ, ຍົກລະດັບ ແລະ ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານ-ລັດຖະກອນກວດກາລັດ;

26. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

27. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

28. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ຕໍ່ປະທານປະເທດ ແລະ ສະພາແຫ່ງຊາດ ຢ່າງເປັນປົກກະຕິ;

29. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 42 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາລັດຂັ້ນກະຊວງ**

ອົງການກວດກາລັດຂັ້ນກະຊວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທໍາມະນູນ, ກົດໝາຍ ແລະ ແຜນການ ຂອງອົງການກວດກາລັດຂັ້ນເທິງ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມຂະແໜງການ ແລະ ການບໍລິຫານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຜັນຂະຫຍາຍ ມະຕິກອງປະຊຸມວຽກງານກວດກາລັດທົ່ວປະເທດ, ມະຕິກອງປະຊຸມໃຫຍ່ຂອງກະຊວງ, ອົງການ ເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ເພື່ອສະເໜີລັດຖະມົນຕີ, ຫົວໜ້າອົງການ ພິຈາລະນາຕົກລົງ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ສະເໜີ ລັດຖະມົນຕີ, ຫົວໜ້າອົງການ ອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ, ລະບຽບການ ກ່ຽວກັບວຽກງານກວດກາລັດ ຕາມຂະແໜງການສາຍຕັ້ງຂອງຕົນ;

5. ກວດກາ ການປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງ ຂັ້ນຕົນ ແລະ ຂັ້ນລຸ່ມຖັດຕົນ;

6. ກວດກາ ການນໍາໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຫົວໜ້າ ແລະ ຮອງຫົວໜ້າຂັ້ນກົມ, ຫົວໜ້າ ແລະ ຮອງຫົວໜ້າຂັ້ນພະແນກ ແລະ ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານວິສາຫະກິດ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ຂັ້ນກະຊວງຄຸ້ມຄອງ;

7. ຊຸກຍູ້ ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິສາຫະກິດ ທີ່ຂຶ້ນກັບການຄຸ້ມຄອງຂອງຂັ້ນກະຊວງ ແລະ ຂະແໜງກວດກາລັດຂອງພະແນກການຂັ້ນແຂວງ ໃນການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ;

8. ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຂອງຫຼາຍກົມ, ຫຼາຍຫົວໜ່ວຍທຸລະກິດທີ່ຂຶ້ນກັບການຄຸ້ມຄອງຂັ້ນກະຊວງ ແລະ ວຽກງານຂອງອົງການກວດກາລັດຂອງພະແນກການຂັ້ນແຂວງ;

9. ສະເໜີ ໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການຕໍ່ຜູ້ກະທໍາຜິດຕາມກົດໝາຍ ທີ່ມີສ່ວນພົວພັນກັບຜົນຂອງການກວດກາ;

10. ພິຈາລະນາ ແລະ ແກ້ໄຂຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

11. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດໍາເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ, ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

12. ກວດກາ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດໃນການເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ, ຂາດຈັນຍາບັນ, ຈັນຍາທໍາ ໃນວິຊາຊີບ ຊຶ່ງພາໃຫ້ເກີດຜົນເສຍຫາຍແກ່ຊັບສິນຂອງ ລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ;

13. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ແລະ ການແກ້ໄຂຜົນການກວດກາຕາມຜົນການກວດສອບ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ຕາມມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈໍາສະພາແຫ່ງຊາດ ແລະ ຕິດຕາມ, ຊຸກຍູ້ການປະຕິບັດຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດກ່ຽວກັບຄະດີສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ;

14. ກວດກາ ການແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ-ລັດຖະກອນ ຕາມຂັ້ນກະຊວງຄຸ້ມຄອງ;

15. ສະເໜີ ມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ;

16. ສ້າງ, ບໍາລຸງ, ຍົກລະດັບ ແລະ ສະເໜີປະຕິບັດນະໂຍບາຍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນກວດກາລັດ ຕາມຂັ້ນກະຊວງຄຸ້ມຄອງ;

17. ປະສານສົມທົບກັບບັນດາກົມພາຍໃນຂັ້ນກະຊວງ ໃນການກໍານົດແຜນການດໍາເນີນການກວດກາ, ຕົກລົງແກ້ໄຂ ແລະ ປະຕິບັດຜົນການກວດກາ ຕາມພາລະບົດບາດຂອງຕົນ;

18. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ການແກ້ໄຂຜົນການກວດກາ ໃນຂອບເຂດສິດຄຸ້ມຄອງຂອງຂັ້ນກະຊວງ ຕໍ່ລັດຖະມົນຕີ, ຫົວໜ້າອົງການ ແລະ ປະທານອົງການກວດກາແຫ່ງລັດ;

19. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 43 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາລັດຂັ້ນແຂວງ**

ອົງການກວດກາລັດຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ມະຕິຂອງສະພາປະຊາຊົນຂັ້ນແຂວງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຜັນຂະຫຍາຍ ແຜນຍຸດທະສາດ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ຂອງອົງການກວດກາແຫ່ງລັດ, ອົງການປົກຄອງຂັ້ນແຂວງ ເປັນ ແຜນການ, ແຜນງານ ແລະ ໂຄງການ ລະອຽດຂອງຕົນ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ຊີ້ນໍາ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ;

5. ກວດກາ ການປະຕິບັດ ນະໂຍບາຍ, ກົດໝາຍ, ແຜນການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະແນກການຂັ້ນແຂວງ, ຫ້ອງການຂັ້ນເມືອງ ແລະ ການຈັດຕັ້ງອື່ນ ທີ່ນໍາໃຊ້ຊັບສິນ ແລະ ງົບປະມານຂອງລັດ;

6. ກວດກາ ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຫົວໜ້າພະແນກການ, ຫົວໜ້າອົງການ ຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ, ຮອງຫົວໜ້າພະແນກການ, ຮອງຫົວໜ້າອົງການຂັ້ນແຂວງ, ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້ານະຄອນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ຂັ້ນແຂວງຄຸ້ມຄອງ;

7. ສະເໜີ ສະພາປະຊາຊົນຂັ້ນແຂວງ ພິຈາລະນາດຳເນີນການກວດກາ ຕໍ່ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ, ພະນັກງານຂອງສະພາປະຊາຊົນຂັ້ນແຂວງ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ພາກ, ແຂວງ, ນະຄອນຫຼວງ ແລະ ເຂດ ທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງແຕ່ງຕັ້ງ ເມື່ອມີປາກົດການລະເມີດກົດໝາຍ;

8. ສະເໜີໃຫ້ອົງການທີ່ກ່ຽວຂ້ອງຂັ້ນແຂວງ ປະຕິບັດມາດຕະການ ຕໍ່ຜູ້ກະທຳຜິດຕາມກົດໝາຍ ທີ່ມີສ່ວນພົວພັນກັບຜົນຂອງການກວດກາ;

9. ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍພະແນກການຂັ້ນແຂວງ ແລະ ຂອງຫຼາຍ ເມືອງ, ເທດສະບານ, ນະຄອນ ທີ່ຂຶ້ນກັບອົງການປົກຄອງຂັ້ນແຂວງ;

10. ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

11. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດຳເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

12. ກວດກາຜົນການກວດສອບ ຕາມມະຕິກອງປະຊຸມຂອງສະພາປະຊາຊົນຂັ້ນແຂວງ ຫຼື ຕາມການສະເໜີຂອງອົງການກວດສອບປະຈຳພາກ ແລະ ຕາມການມອບໝາຍຂອງອົງການກວດກາແຫ່ງລັດ;

13. ກວດກາ ໂຄງການລົງທຶນຂອງລັດຂັ້ນແຂວງຄຸ້ມຄອງເລີ່ມແຕ່ທ້ອງທີ່ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

14. ສະເໜີ ມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ແລະ ອົງການກວດກາແຫ່ງລັດ;

15. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ຂອງພະແນກການຂັ້ນແຂວງ, ຫ້ອງການຂັ້ນເມືອງ ແລະ ຕິດຕາມ, ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ;

16. ກວດກາ ການຈັດຕັ້ງຂອງພະແນກການຂັ້ນແຂວງ, ຫ້ອງການຂັ້ນເມືອງ, ຄະນະເລຂາທິການ, ຄະນະກຳມະການ ຂອງສະພາປະຊາຊົນຂັ້ນແຂວງ ເມື່ອມີປາກົດການລະເມີດກົດໝາຍ ແລະ ມະຕິຂອງສະພາປະຊາຊົນຂັ້ນແຂວງ;

17. ກວດກາ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດໃນການເລີນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ, ຂາດຈັນຍາບັນ, ຈັນຍາທຳ ໃນວິຊາຊີບ ຊຶ່ງພາໃຫ້ເກີດຜົນເສຍຫາຍແກ່ຊັບສິນ ຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ;

18. ກວດກາການແຈ້ງຊັບສິນ ແລະ ລາຍຮັບ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດຂອງລັດ ຂັ້ນແຂວງຄຸ້ມຄອງ;

19. ສະເໜີ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ລົງມະຕິບໍ່ໄວ້ວາງໃຈ ຕໍ່ບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ເມື່ອມີປາກົດການລະເມີດກົດໝາຍ;

20. ສະເໜີໂຈະຊົ່ວຄາວ ການແຕ່ງຕັ້ງ, ສັບຊ້ອນ, ການຍົກຍ້າຍ, ສັບປ່ຽນ ຫຼື ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ທີ່ແມ່ນເປົ້າໝາຍກວດກາໃນໄລຍະເວລາດຳເນີນການກວດກາ ຫຼື ດຳເນີນການສືບສວນ-ສອບສວນບໍ່ທັນສຳເລັດ ບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

21. ສະເໜີ ພະແນກການຂັ້ນແຂວງ, ຄະນະເລຂາທິການ, ຄະນະກຳມະການ ຂອງສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ໂຈະການປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນການກວດກາ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;

22. ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ຫົວໜ້າພະແນກການຂັ້ນແຂວງ ພິຈາລະນາແຕ່ງຕັ້ງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເພື່ອດຳເນີນການກວດກາ;

23. ສ້າງ, ບຳລຸງ, ຍົກລະດັບ ແລະ ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕໍ່ໃຫ້ພະນັກງານ-ລັດຖະກອນ ກວດກາລັດ ຂັ້ນແຂວງ, ພະແນກການຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງ;

24. ພົວພັນ ແລະ ປະສານສົມທົບກັບອົງການຈັດຕັ້ງຂອງລັດ ຂັ້ນແຂວງ, ຂັ້ນເມືອງ, ອົງການກວດສອບປະຈຳພາກ ແລະ ກວດສອບເອກະລາດ ກ່ຽວກັບການດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນການກວດກາ ຕາມພາລະບົດບາດຂອງຕົນ;

25. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມການເຫັນດີ, ມອບໝາຍຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

26. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ປະທານອົງການກວດກາແຫ່ງລັດ ຢ່າງເປັນປົກກະຕິ;

27. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາລັດຂອງພະແນກການຂັ້ນແຂວງ**

ອົງການກວດກາລັດຂອງພະແນກການຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ແຜນການ ຂອງອົງການກວດລັດຂັ້ນເທິງ ກ່ຽວກັບວຽກງານກວດກາລັດ ຕາມຂະແໜງການ ແລະ ການບໍລິຫານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

3. ຜັນຂະຫຍາຍ ມະຕິກອງປະຊຸມວຽກງານກວດກາລັດ ຂັ້ນກະຊວງ, ຂັ້ນແຂວງ, ມະຕິກອງປະຊຸມໃຫຍ່ຂອງພະແນກການຂັ້ນແຂວງ ເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ເພື່ອສະເໜີຫົວໜ້າພະແນກການຂັ້ນແຂວງ ພິຈາລະນາຕົກລົງ ແລະ ຈັດຕັ້ງປະຕິບັດ;

4. ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງ ຂັ້ນຕົນ ແລະ ຂັ້ນລຸ່ມຖັດຕົນ;

5. ຊຸກຍູ້, ກວດກາ ຫ້ອງການ, ຂະແໜງການ, ຫົວໜ່ວຍວິສາຫະກິດ ທີ່ຂຶ້ນກັບການຄຸ້ມຄອງຂອງພະແນກການຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ;

6. ກວດກາການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດ ໃນການເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ, ຂາດຈັນຍາບັນ, ຈັນຍາທຳ ໃນວິຊາຊີບ ຊຶ່ງພາໃຫ້ເກີດຜົນເສຍຫາຍແກ່ຊັບສິນຂອງ ລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

7. ກວດກາ ການປະຕິບັດໜ້າທີ່ຂອງຫົວໜ້າ ແລະ ຮອງຫົວໜ້າຂະແໜງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ພາຍໃນພະແນກການຂອງຕົນ ແລະ ຫ້ອງການຂັ້ນເມືອງ ຕາມສາຍຕັ້ງ;

8. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການຕໍ່ຜູ້ກະທຳຜິດຕາມກົດໝາຍ;

9. ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

10. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

11. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ຂອງບັນດາຂະແໜງການທີ່ຂຶ້ນກັບພະແນກການຂັ້ນແຂວງ ແລະ ຕິດຕາມພາກສ່ວນທີ່ກ່ຽວຂ້ອງ ປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ;

12. ກວດກາ ການແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ ຂອງພະແນກການຂັ້ນແຂວງຄຸ້ມຄອງ;

13. ສະເໜີ ມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ແລະ ອົງການກວດກາລັດຂັ້ນແຂວງ;

14. ສະເໜີ ບຳລຸງ, ຍົກລະດັບ, ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນກວດກາລັດທີ່ຂຶ້ນກັບສິດຄຸ້ມຄອງຂອງຕົນ;

15. ພົວພັນ ແລະ ປະສານສົມທົບກັບບັນດາຂະແໜງການພາຍໃນພະແນກການຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງ ຕາມສາຍຕັ້ງ ເພື່ອດຳເນີນການກວດກາ ແລະ ການແກ້ໄຂຜົນການກວດກາ ຕາມພາລະບົດບາດຂອງຕົນ;

16. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ການແກ້ໄຂຜົນການກວດກາ ໃນຂອບເຂດສິດຄຸ້ມຄອງ ຂອງພະແນກການຂັ້ນແຂວງ ຕໍ່ຫົວໜ້າພະແນກການຂັ້ນແຂວງ, ປະທານອົງການກວດກາລັດຂັ້ນແຂວງ, ກົມກວດກາລັດຂັ້ນກະຊວງ ຕາມສາຍຕັ້ງ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ອົງການກວດກາລັດຂັ້ນເມືອງ**

ອົງການກວດກາລັດຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ແຜນການ ຂອງອົງການກວດກາລັດຂັ້ນເທິງກ່ຽວກັບວຽກງານກວດກາລັດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

3. ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຫ້ອງການຂັ້ນເມືອງ, ບ້ານ ແລະ ການຈັດຕັ້ງອື່ນ ທີ່ນຳໃຊ້ຊັບສິນ ແລະ ງົບປະມານຂອງລັດ;

4. ຊຸກຍູ້, ກວດກາ ຫ້ອງການຂັ້ນເມືອງ, ອົງການປົກຄອງບ້ານ ໃນການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ທີ່ຂຶ້ນກັບການຄຸ້ມຄອງຂອງອົງການປົກຄອງຂັ້ນເມືອງ;

5. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ແລະ ກວດກາໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ ຕາມຂອບເຂດຄວາມຮັບຜິດຊອບ ຂອງອົງການປົກຄອງຂັ້ນເມືອງ;

6. ກວດກາ ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຫົວໜ້າ ແລະ ຮອງຫົວໜ້າຫ້ອງການຂັ້ນເມືອງ, ຫົວໜ້າ ແລະ ຮອງຫົວໜ້າອົງການຂັ້ນເມືອງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ, ນາຍບ້ານ, ຮອງນາຍບ້ານ ແລະ ຜູ້ທີ່ໄດ້ຮັບມອບສິດຈາກທາງການ ຂັ້ນເມືອງຄຸ້ມຄອງ;

7. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການຕໍ່ຜູ້ກະທຳຜິດຕາມກົດໝາຍ;

8. ກວດກາວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍຫ້ອງການຂັ້ນເມືອງ ແລະ ຂອງຫຼາຍບ້ານ ຂຶ້ນກັບອົງການປົກຄອງຂັ້ນເມືອງ;

9. ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

10. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດຳເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

11. ສະເໜີ ມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ແລະ ອົງການກວດກາລັດຂັ້ນແຂວງ;

12. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ຂອງຫ້ອງການຂັ້ນເມືອງ, ບ້ານ ແລະ ຕິດຕາມ, ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ;

13. ກວດກາການຈັດຕັ້ງ ຂອງຫ້ອງການຂັ້ນເມືອງ, ບ້ານ ເມື່ອມີປາກົດການລະເມີດກົດໝາຍ ແລະ ມະຕິຂອງສະພາປະຊາຊົນຂັ້ນແຂວງ;

14. ກວດກາ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດ ໃນການເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ, ຂາດຈັນຍາບັນ, ຈັນຍາທຳ ໃນວິຊາຊີບ ຊຶ່ງພາໃຫ້ເກີດຜົນເສຍຫາຍແກ່ຊັບສິນຂອງ ລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

15. ກວດກາ ການແຈ້ງຊັບສິນ ແລະ ລາຍຮັບ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສະຫະກິດຂອງລັດຂັ້ນເມືອງຄຸ້ມຄອງ;

16. ສະເໜີ ໂຈະຊົ່ວຄາວ ການແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ສັບປ່ຽນ ຫຼື ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ທີ່ແມ່ນເປົ້າໝາຍກວດກາ ໃນໄລຍະເວລາດຳເນີນການກວດກາ ຫຼື ດຳເນີນການສືບສວນ-ສອບສວນ ບໍ່ທັນສຳເລັດ ບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

17. ສະເໜີໃຫ້ອົງການປົກຄອງຂັ້ນເມືອງ ໂຈະການປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນການກວດກາ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;

18. ສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາແຕ່ງຕັ້ງ ຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເພື່ອດຳເນີນການກວດກາ;

19. ບຳລຸງ, ຍົກລະດັບ, ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນກວດກາລັດຂັ້ນເມືອງ;

20. ພົວພັນ ແລະ ປະສານສົມທົບກັບອົງການຈັດຕັ້ງຂອງລັດຂັ້ນ ເມືອງ ແລະ ບ້ານ ກ່ຽວກັບການດຳເນີນການກວດກາລັດ, ການແກ້ໄຂ ແລະ ການປະຕິບັດຜົນການກວດກາ ຕາມພາລະບົດບາດຂອງຕົນ;

21. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ການແກ້ໄຂຜົນການກວດກາ ຕາມຂອບເຂດສິດຂອງຕົນ ຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ປະທານອົງການກວດກາລັດຂັ້ນແຂວງ ຢ່າງເປັນປົກກະຕິ;

22. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 4
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການກວດກາລັດ

**ມາດຕາ 46 (ປັບປຸງ) ໂຄງປະກອບ ການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການກວດກາແຫ່ງລັດ**

ໂຄງປະກອບການຈັດຕັ້ງ ຂອງອົງການກວດກາແຫ່ງລັດ ປະກອບດ້ວຍ ຫ້ອງການ, ກົມ, ສະຖາບັນ ແລະ ພະແນກ.

ໂຄງປະກອບບຸກຄະລາກອນ ຂອງອົງການກວດກາແຫ່ງລັດ ປະກອບດ້ວຍ ປະທານ, ຮອງປະທານ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ, ຫົວໜ້າ ແລະ ຮອງຫົວໜ້າກົມ, ຫົວໜ້າ ແລະ ຮອງຫົວໜ້າສະຖາບັນ, ຫົວໜ້າ ແລະ ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ.

**ມາດຕາ 47 (ປັບປຸງ) ປະທານອົງການກວດກາແຫ່ງລັດ**

ປະທານອົງການກວດກາແຫ່ງລັດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ, ມີອາຍຸການເທົ່າກັບ ອາຍຸການຂອງສະພາແຫ່ງຊາດແຕ່ລະຊຸດ, ມີຄວາມຮັບຜິດຊອບຕໍ່ປະທານປະເທດ, ສະພາແຫ່ງຊາດ ກ່ຽວກັບການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ.

ປະທານອົງການກວດກາແຫ່ງລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ ຊີ້ນຳ ການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນຂອບເຂດທົ່ວປະເທດ;

2. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ;

3. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຫຼື ນິຕິກຳອື່ນ ຂອງອົງການກວດກາລັດຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຫຼື ຂັດກັບນິຕິກຳ ຂອງອົງການກວດກາລັດຂັ້ນເທິງ;

4. ຕົກລົງດຳເນີນການກວດກາ ຕາມພາລະບົດບາດ, ສິດ, ໜ້າທີ່ ຂອງຕົນ. ໃນກໍລະນີບັນຫາການຕົກລົງນັ້ນຫາກເກີນສິດ ແລະ ໜ້າທີ່ ຂອງຕົນ ຕ້ອງສະເໜີຕໍ່ປະທານປະເທດ ເພື່ອພິຈາລະນາຕົກລົງ;

5. ອອກຄຳສັ່ງ ເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ;

6. ສະເໜີ ປະທານປະເທດ ຕົກລົງດຳເນີນການກວດກາ ກະຊວງ, ອົງການ, ຄະນະເລຂາທິການ, ກຳມາທິການ ຂອງສະພາແຫ່ງຊາດ, ອົງການປົກຄອງຂັ້ນແຂວງ, ວິສະຫະກິດ ແລະ ພະນັກງານຂັ້ນສູນກາງຄຸ້ມຄອງ ເມື່ອມີປາກົດການລະເມີດກົດໝາຍ;

7. ສະເໜີ ນາຍົກລັດຖະມົນຕີ ພິຈາລະນາຕົກລົງແກ້ໄຂຜົນການກວດກາ ໃນຂອບເຂດການຄຸ້ມຄອງ ຂອງລັດຖະບານ;

8. ສະເໜີຕໍ່ ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ດຳເນີນການກວດກາ ໃນຂອບເຂດການຄຸ້ມຄອງຂອງ ກະຊວງ, ອົງການ, ແຂວງ, ນະຄອນຫຼວງ;

9. ສະເໜີ ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນບັນຫາທີ່ບໍ່ເອກະພາບ ລະຫວ່າງຫົວໜ້າກົມກວດກາລັດ ຂັ້ນກະຊວງກັບລັດຖະມົນຕີ, ຫົວໜ້າອົງການ, ປະທານອົງການກວດກາລັດຂັ້ນແຂວງ ກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການພິຈາລະນາຜົນການກວດກາ;

10. ສະເໜີຄະນະປະຈຳສະພາແຫ່ງຊາດ ໂຈະ ຫຼື ຍົກເລີກ ການຈັດຕັ້ງປະຕິບັດນິຕິກຳຂອງລັດຖະບານ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບ

ແຫ່ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູງກາງ ທັງໝົດ ຫຼື ບາງສ່ວນ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ;

11. ສະເໜີລັດຖະບານ ໂຈະ ຫຼື ຍົກເລີກ ການປະຕິບັດນິຕິກຳຂອງ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ທັງໝົດ ຫຼື ບາງສ່ວນ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ;

12. ສະເໜີປະທານປະເທດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານອົງການກວດກາແຫ່ງລັດ;

13. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ, ປະຕິບັດນະໂຍບາຍຍ້ອງຍໍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນ ຂອງອົງການກວດກາແຫ່ງລັດ ທີ່ຂຶ້ນກັບຄວາມຮັບຜິດຊອບ ແລະ ຂອບເຂດສິດຂອງຕົນ;

14. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ອົງການກວດກາລັດຂັ້ນແຂວງ ແລະ ປະທານອົງການກວດກາລັດຂັ້ນເມືອງ;

15. ລາຍງານ ແລະ ສະເໜີຄຳເຫັນ ຕໍ່ລັດຖະບານ ແລະ ຂັ້ນເທິງ ຂອງເປົ້າໝາຍຖືກກວດກາ. ໃນກໍລະນີ ບໍ່ເປັນເອກະພາບກັນ ຫຼື ຍັງມີຄຳເຫັນທີ່ແຕກຕ່າງກັນ ກ່ຽວກັບການຕົກລົງແກ້ໄຂຜົນການກວດກາ ກ່ອນການລາຍງານຕໍ່ປະທານປະເທດ ແລະ/ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ;

16. ລາຍງານຜົນການກວດກາ ແລະ ແຜນການ ປະຈຳປີ, ຫ້າປີ ຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 48 (ປັບປຸງ) ຮອງປະທານອົງການກວດກາແຫ່ງລັດ

ຮອງປະທານອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງປະທານອົງການກວດກາແຫ່ງລັດ.

ຮອງປະທານອົງການກວດກາແຫ່ງລັດ ມີ ສິດ ແລະ ໜ້າທີ່ ຊ່ວຍປະທານອົງການກວດກາແຫ່ງລັດ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີ ປະທານບໍ່ຢູ່ ຫຼື ຕິດຂັດ ຮອງປະທານ ຜູ້ໄດ້ຮັບມອບໝາຍຈາກປະທານເປັນຜູ້ຮັກສາການແທນ.

### ມາດຕາ 49 (ໃໝ່) ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ, ກົມ, ສະຖາບັນ, ພະແນກ ຂອງອົງການກວດກາແຫ່ງລັດ

ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນ ຂອງອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ພາຍຫຼັງມີຄວາມເປັນເອກະພາບກັບອົງການທີ່ກ່ຽວຂ້ອງ.

ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນ ຂອງອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ບົນພື້ນຖານການເຫັນດີເປັນເອກະພາບກັບກະຊວງພາຍໃນ.

ຫົວໜ້າພະແນກ, ຮອງຫົວໜ້າພະແນກ ຂອງອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າຫ້ອງການ, ກົມ, ສະຖາບັນທີ່ກ່ຽວຂ້ອງ ແລະ ຕາມການກຳນົດຕຳແໜ່ງງານ.

ສຳລັບສິດ ແລະ ໜ້າທີ່ ຂອງຫົວໜ້າ, ຮອງຫົວໜ້າ ຫ້ອງການ, ກົມ, ສະຖາບັນ, ພະແນກ ຂອງອົງການກວດກາແຫ່ງລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 50 ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງອົງການກວດກາລັດຂັ້ນກະຊວງ**

ໂຄງປະກອບການຈັດຕັ້ງ ຂອງອົງການກວດກາລັດຂັ້ນກະຊວງ ປະກອບດ້ວຍ ກົມ ແລະ ພະແນກ.

ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດຂັ້ນກະຊວງ ປະກອບດ້ວຍ ຫົວໜ້າ ແລະ ຮອງຫົວໜ້າກົມ, ຫົວໜ້າ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ.

**ມາດຕາ 51 (ປັບປຸງ) ຫົວໜ້າກົມກວດກາລັດຂັ້ນກະຊວງ**

ຫົວໜ້າກົມກວດກາລັດຂັ້ນກະຊວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີ, ຫົວໜ້າອົງການ ບົນພື້ນຖານການເຫັນດີເປັນເອກະພາບ ກັບປະທານອົງການກວດກາແຫ່ງລັດ, ຮັບຜິດຊອບຕໍ່ລັດຖະມົນຕີ, ຫົວໜ້າອົງການ, ປະທານອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

ສຳລັບການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າກົມກວດກາລັດຂອງ ສະພາແຫ່ງຊາດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ແລະ ອົງການອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາແຫ່ງລັດ.

ຫົວໜ້າກົມກວດກາລັດຂັ້ນກະຊວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຮັບຜິດຊອບຕໍ່ ລັດຖະມົນຕີ, ຫົວໜ້າອົງການ, ປະທານອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

2. ຊີ້ນຳ ວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ໃນຂອບເຂດການຄຸ້ມຄອງຂັ້ນກະຊວງ ແລະ ກວດກາການປະຕິບັດວຽກງານຂອງຂະແໜງການຕົນ;

3. ສະເໜີ ລັດຖະມົນຕີ, ຫົວໜ້າອົງການ ສ້າງ ຫຼື ປັບປຸງ ນິຕິກຳກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

4. ອອກຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃຫ້ຂະແໜງການຂອງຕົນ;

5. ສະເໜີ ລັດຖະມົນຕີ, ຫົວໜ້າອົງການ ແຕ່ງຕັ້ງຄະນະກວດກາສະເພາະກິດ;

6. ດຳເນີນການກວດກາ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ. ໃນກໍລະນີທາກເກີນສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີ ລັດຖະມົນຕີ, ຫົວໜ້າອົງການ ເພື່ອພິຈາລະນາຕົກລົງ;

7. ສະເໜີ ປະທານອົງການກວດກາລັດແຫ່ງລັດ ອອກຄຳສັ່ງເປີດການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;

8. ສະເໜີ ລັດຖະມົນຕີ, ຫົວໜ້າອົງການ ໂຈະ ຫຼື ຍົກເລີກ ນິຕິກຳຂອງຫ້ອງການ, ກົມ, ສະຖາບັນພາຍໃນຂັ້ນກະຊວງ ຫຼື ພະແນກການສາຍຕັ້ງຂັ້ນລຸ່ມຂອງອົງການດັ່ງກ່າວ ທີ່ຂັດກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

9. ສະເໜີ ລັດຖະມົນຕີ, ຫົວໜ້າອົງການ ພິຈາລະນາຕົກລົງ ແກ້ໄຂຜົນການກວດກາ. ໃນກໍລະນີຄຳສະເໜີດັ່ງກ່າວ ບໍ່ໄດ້ຮັບການພິຈາລະນາ ຫຼື ໄດ້ຮັບການພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ກໍມີສິດລາຍງານຕໍ່ປະທານອົງການກວດກາແຫ່ງລັດ ເພື່ອພິຈາລະນາຕົກລົງ;

10. ພິຈາລະນາ ແລະ ແກ້ໄຂຄຳສະເໜີ, ແນະນຳ ຫົວໜ້າຂະແໜງກວດກາລັດຂັ້ນລຸ່ມ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກວດກາລັດ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 (ປັບປຸງ) ຮອງຫົວໜ້າກົມກວດກາລັດຂັ້ນກະຊວງ**

ຮອງຫົວໜ້າກົມກວດກາລັດຂັ້ນກະຊວງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ຕຳແໜ່ງ ໂດຍລັດຖະມົນຕີ, ຫົວໜ້າອົງການ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າກົມກວດກາລັດຂັ້ນກະຊວງທີ່ກ່ຽວຂ້ອງ.

ຮອງຫົວໜ້າກົມກວດກາລັດຂັ້ນກະຊວງ ມີ ສິດ ແລະ ໜ້າທີ່ ຊ່ວຍຫົວໜ້າກົມ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າກົມ. ໃນກໍລະນີ ຫົວໜ້າບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າຜູ້ໄດ້ຮັບມອບໝາຍຈາກຫົວໜ້າກົມເປັນຜູ້ຮັກສາການແທນ.

**ມາດຕາ 53 (ໃໝ່) ຫົວໜ້າ, ຮອງຫົວໜ້າ ພະແນກຂອງກົມກວດກາລັດຂັ້ນກະຊວງ**

ຫົວໜ້າ, ຮອງຫົວໜ້າ ພະແນກຂອງກົມກວດກາລັດຂັ້ນກະຊວງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ຕຳແໜ່ງ ໂດຍລັດຖະມົນຕີ, ຫົວໜ້າອົງການ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າກົມກວດກາລັດຂັ້ນກະຊວງນັ້ນ.

ສຳລັບ ສິດ ແລະ ໜ້າທີ່ຂອງ ຫົວໜ້າ, ຮອງຫົວໜ້າ ພະແນກຂອງກົມກວດກາລັດຂັ້ນກະຊວງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 54 ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງອົງການກວດກາລັດຂັ້ນແຂວງ**

ໂຄງປະກອບການຈັດຕັ້ງ ຂອງອົງການກວດກາລັດຂັ້ນແຂວງ ປະກອບດ້ວຍ ຫ້ອງການ ແລະ ຂະແໜງການ.

ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດຂັ້ນແຂວງ ປະກອບດ້ວຍ ປະທານ, ຮອງປະທານ, ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ, ຫົວໜ້າ ແລະ ຮອງຫົວໜ້າ ຂະແໜງ ແລະ ລັດຖະກອນວິຊາການ.

**ມາດຕາ 55 (ປັບປຸງ) ປະທານອົງການກວດກາລັດຂັ້ນແຂວງ**

ປະທານອົງການກວດກາລັດຂັ້ນແຂວງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ຕຳແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງສະພາປະຊາຊົນຂັ້ນແຂວງພິຈາລະນາຮັບຮອງ.

ປະທານອົງການກວດກາລັດຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ ຊີ້ນຳ ການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມຂອບເຂດສິດ ແລະ ຂັ້ນຄຸ້ມຄອງຂອງຂັ້ນແຂວງ;

2. ຮັບຜິດຊອບຕໍ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ສະພາປະຊາຊົນຂັ້ນແຂວງ ແລະ ປະທານອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຂອງຕົນ;

3. ຕົກລົງດຳເນີນການກວດກາ ຕາມສິດ ແລະ ໜ້າທີ່ ຂອງຕົນ. ໃນກໍລະນີບັນຫາການຕົກລົງນັ້ນ ຫາກເກີນສິດ ແລະ ໜ້າທີ່ ຂອງຕົນ ຕ້ອງສະເໜີຕໍ່ ປະທານອົງການກວດກາແຫ່ງລັດ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາຕົກລົງ;

4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ອອກຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ສະເໜີໃຫ້ ຫົວໜ້າພະແນກການຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ດຳເນີນການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ;

7. ສະເໜີໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ. ໃນກໍລະນີບໍ່ພິຈາລະນາ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ມີສິດ ລາຍງານຕໍ່ປະທານອົງການກວດກາແຫ່ງລັດ ເພື່ອພິຈາລະນາຕົກລົງ;

8. ລາຍງານຜົນການກວດກາ ແລະ ແຜນການ ປະຈຳປີ, ຫ້າປີ ຕໍ່ປະທານອົງການກວດກາແຫ່ງລັດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ;

9. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນບັນຫາທີ່ບໍ່ເປັນເອກະພາບ ກ່ຽວກັບການແກ້ໄຂຜົນ ການກວດກາ ລະຫວ່າງປະທານອົງການກວດກາລັດຂັ້ນແຂວງ ກັບຫົວໜ້າພະແນກການຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ. ໃນກໍລະນີທີ່ບໍ່ພິຈາລະນາຄືນ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ມີສິດ ລາຍງານຕໍ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາຕົກລົງ;

10. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳໃຕ້ ກົດໝາຍອື່ນ ຂອງອົງການກວດກາລັດຂັ້ນລຸ່ມ ທີ່ຂັດກັບກົດໝາຍ ແລະ ລະບຽບການ ຂອງອົງການກວດກາລັດ ຂັ້ນເທິງ;

11. ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໂຈະ ຫຼື ຍົກເລີກ ນິຕິກຳຂອງພະແນກການຂັ້ນ ແຂວງ ຫຼື ອົງການປົກຄອງຂັ້ນເມືອງ ທີ່ຂັດກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 (ປັບປຸງ) ຮອງປະທານອົງການກວດກາລັດຂັ້ນແຂວງ**

ຮອງປະທານອົງການກວດກາລັດຂັ້ນແຂວງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ຕຳແໜ່ງ ໂດຍປະທານ ອົງການກວດກາແຫ່ງລັດ ຕາມການສະເໜີຂອງປະທານອົງການກວດກາລັດຂັ້ນແຂວງ ບົນພື້ນຖານການເຫັນດີ ເປັນເອກະພາບກັບ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ຮອງປະທານອົງການກວດກາລັດຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຊ່ວຍປະທານອົງການກວດກາລັດຂັ້ນ ແຂວງ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີປະທານບໍ່ຢູ່ ຫຼື ຕິດຂັດ ຮອງປະທານຜູ້ໄດ້ຮັບມອບໝາຍຈາກປະທານເປັນຜູ້ຮັກສາການແທນ.

**ມາດຕາ 57 (ໃໝ່) ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ, ຂະແໜງ ຂອງອົງການກວດກາລັດຂັ້ນແຂວງ**

ຫົວໜ້າ, ຮອງຫົວໜ້າ ຫ້ອງການ, ຫົວໜ້າ, ຮອງຫົວໜ້າ ຂະແໜງຂອງອົງການກວດກາລັດ ຂັ້ນແຂວງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີ ຂອງປະທານອົງການກວດກາລັດຂັ້ນແຂວງ.

ສຳລັບ ສິດ ແລະ ໜ້າທີ່ຂອງ ຫົວໜ້າ, ຮອງຫົວໜ້າ ຫ້ອງການ, ຫົວໜ້າ, ຮອງຫົວໜ້າ ຂະແໜງ ຂອງ ອົງການກວດກາລັດຂັ້ນແຂວງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 58 (ປັບປຸງ) ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການກວດກາລັດ ຂອງພະແນກການຂັ້ນແຂວງ**

ໂຄງປະກອບການຈັດຕັ້ງຂອງອົງການກວດກາລັດຂອງພະແນກການຂັ້ນແຂວງ ມີ ຂະແໜງ.

ໂຄງປະກອບບຸກຄະລາກອນຂອງອົງການກວດກາລັດ ຂອງພະແນກການຂັ້ນແຂວງ ມີ ຫົວໜ້າ, ຮອງຫົວໜ້າ ຂະແໜງ ແລະ ລັດຖະກອນວິຊາການ.

**ມາດຕາ 59 (ປັບປຸງ) ຫົວໜ້າຂະແໜງກວດກາລັດຂອງພະແນກການຂັ້ນແຂວງ**

ຫົວໜ້າຂະແໜງກວດກາລັດຂອງພະແນກການຂັ້ນແຂວງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຫົວໜ້າພະແນກການຂັ້ນແຂວງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາລັດຂັ້ນແຂວງ.

ສຳລັບການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າຂະແໜງກວດກາລັດຂອງ ສະພາປະຊາຊົນຂັ້ນແຂວງ, ສານປະຊາຊົນຂັ້ນແຂວງ, ອົງການໄອຍະການປະຊາຊົນຂັ້ນແຂວງ ແລະ ອົງການອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາລັດຂັ້ນແຂວງ.

ຫົວໜ້າຂະແໜງກວດກາລັດຂອງພະແນກການຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບຕໍ່ ຫົວໜ້າພະແນກການຂັ້ນແຂວງ, ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າກົມກວດກາລັດຂັ້ນກະຊວງ ຕາມສາຍຕັ້ງ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ, ໜ້າທີ່ຂອງຕົນ;

2. ນຳພາ, ຊີ້ນຳ ການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ສະເໜີອອກຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

4. ສະເໜີ ຫົວໜ້າພະແນກການຂັ້ນແຂວງ ອອກຂໍ້ຕົກລົງ ດຳເນີນການກວດກາ ຕາມພາລະບົດບາດ, ສິດ, ໜ້າທີ່ ຂອງຕົນ. ໃນກໍລະນີບັນຫາການຕົກລົງຫາກເກີນສິດ ແລະ ໜ້າທີ່ ຂອງຫົວໜ້າພະແນກການຂັ້ນແຂວງ ຕ້ອງສະເໜີຕໍ່ປະທານອົງການກວດກາລັດຂັ້ນແຂວງ ເພື່ອພິຈາລະນາຕົກລົງ;

5. ສະເໜີ ຫົວໜ້າພະແນກການຂັ້ນແຂວງ ພິຈາລະນາຕົກລົງ ແກ້ໄຂຜົນການກວດກາໃນຂອບເຂດການຄຸ້ມຄອງຂອງຕົນ. ໃນກໍລະນີທີ່ບໍ່ພິຈາລະນາ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ກໍມີສິດລາຍງານຕໍ່ປະທານອົງການກວດກາລັດຂັ້ນແຂວງ ແລະ ກົມກວດກາລັດຂັ້ນກະຊວງ ເພື່ອພິຈາລະນາຕົກລົງ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 60 (ປັບປຸງ) ຮອງຫົວໜ້າຂະແໜງກວດກາລັດຂອງພະແນກການຂັ້ນແຂວງ**

ຮອງຫົວໜ້າຂະແໜງກວດກາລັດຂອງພະແນກການຂັ້ນແຂວງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຫົວໜ້າພະແນກການຂັ້ນແຂວງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາລັດຂັ້ນແຂວງ.

ສຳລັບການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າຂະແໜງກວດກາລັດຂອງ ສະພາປະຊາຊົນຂັ້ນແຂວງ, ສານປະຊາຊົນຂັ້ນແຂວງ, ອົງການໄອຍະການປະຊາຊົນຂັ້ນແຂວງ ແລະ ອົງການອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາລັດຂັ້ນແຂວງ.

ຮອງຫົວໜ້າຂະແໜງກວດກາລັດຂອງພະແນກການຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຊ່ວຍຫົວໜ້າຂະແໜງກວດກາລັດຂອງພະແນກການຂັ້ນແຂວງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ. ໃນກໍລະນີ ຫົວໜ້າບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າຜູ້ໄດ້ຮັບມອບໝາຍຈາກຫົວໜ້າເປັນຜູ້ຮັກສາການແທນ.

**ມາດຕາ 61 ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການກວດກາລັດຂັ້ນເມືອງ**

ໂຄງປະກອບການຈັດຕັ້ງ ຂອງອົງການກວດກາລັດຂັ້ນເມືອງ ມີ ໜ່ວຍງານ ຈຳນວນໜຶ່ງ.

ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດຂັ້ນເມືອງ ປະກອບດ້ວຍ ປະທານ, ຮອງປະທານ, ຫົວໜ້າ, ຮອງຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການ.

**ມາດຕາ 62 (ປັບປຸງ) ປະທານອົງການກວດກາລັດຂັ້ນເມືອງ**

ປະທານອົງການກວດກາລັດຂັ້ນເມືອງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ຕຳແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາລັດຂັ້ນແຂວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

ປະທານອົງການກວດກາລັດຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ ຊີ້ນຳ ການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຮັບຜິດຊອບຕໍ່ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ, ປະທານອົງການກວດກາລັດຂັ້ນເທິງ ກ່ຽວກັບການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ຕົກລົງດຳເນີນການກວດກາ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ. ໃນກໍລະນີບັນຫາການຕົກລົງຫາກເກີນສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີຕໍ່ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາຕົກລົງ;

5. ສະເໜີປະທານອົງການກວດກາລັດຂັ້ນແຂວງ ອອກຄຳສັ່ງເປີດການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;

6. ສະເໜີ ຫົວໜ້າຫ້ອງການຂັ້ນເມືອງ, ນາຍບ້ານ ດຳເນີນການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ;

7. ສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຕົກລົງແກ້ໄຂຜົນການກວດກາໃນຂອບເຂດການຄຸ້ມຄອງຂອງຕົນ. ໃນກໍລະນີບໍ່ພິຈາລະນາ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ກໍມີສິດລາຍງານຕໍ່ປະທານອົງການກວດກາລັດຂັ້ນແຂວງ ເພື່ອພິຈາລະນາຕົກລົງ;

8. ສະເໜີ ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນບັນຫາທີ່ບໍ່ເປັນເອກະພາບ ລະຫວ່າງຫົວໜ້າອົງການກວດກາລັດກັບຫົວໜ້າຫ້ອງການຂັ້ນເມືອງ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ. ໃນກໍລະນີ ບໍ່ພິຈາລະນາຄືນ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ກໍມີສິດລາຍງານຕໍ່ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາຕົກລົງ;

9. ສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໂຈະ ຫຼື ຍົກເລີກ ນິຕິກຳຂອງຫ້ອງການຂັ້ນເມືອງ ແລະ ອົງການປົກຄອງບ້ານ ທີ່ຂັດກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 63 (ປັບປຸງ) ຮອງປະທານອົງການກວດກາລັດຂັ້ນເມືອງ**

ຮອງປະທານອົງການກວດກາລັດຂັ້ນເມືອງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງປະທານອົງການກວດກາລັດຂັ້ນເມືອງ.

ຮອງປະທານອົງການກວດກາລັດຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຊ່ວຍປະທານອົງການກວດກາລັດຂັ້ນເມືອງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີປະທານບໍ່ຢູ່ ຫຼື ຕິດຂັດ ຮອງປະທານ ຜູ້ໄດ້ຮັບມອບໝາຍຈາກປະທານເປັນຜູ້ຮັກສາການແທນ.

**ມາດຕາ 64 (ໃໝ່) ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານຂອງອົງການກວດກາລັດຂັ້ນເມືອງ**

ຫົວໜ້າ, ຮອງຫົວໜ້າ ໜ່ວຍງານຂອງອົງການກວດກາລັດຂັ້ນເມືອງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງປະທານອົງການກວດກາລັດຂັ້ນເມືອງ.

ສຳລັບ ສິດ ແລະ ໜ້າທີ່ຂອງ ຫົວໜ້າ, ຮອງຫົວໜ້າ ໜ່ວຍງານຂອງອົງການກວດກາລັດຂັ້ນເມືອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 5
## ມາດຕະຖານຂອງ ພະນັກງານ-ລັດຖະກອນກວດກາລັດ

**ມາດຕາ 65 ມາດຕະຖານລວມ ຂອງພະນັກງານ-ລັດຖະກອນກວດກາລັດ**

ພະນັກງານ-ລັດຖະກອນກວດກາລັດ ແມ່ນ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຢ່າງຖືກຕ້ອງຕາມກົດໝາຍ, ມີມາດຕະຖານລວມ ດັ່ງນີ້:

1. ມີຄວາມຈົງຮັກພັກດີ ຕໍ່ປະເທດຊາດ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ;

2. ກຳແໜ້ນແນວທາງນະໂຍບາຍ, ກົດໝາຍ;

3. ມີຄວາມຮັບຜິດຊອບສູງ, ກ້າຫານ, ເດັດຂາດ, ມີໄຫວພິບໃນການປະຕິບັດໜ້າທີ່ວຽກງານ, ມີຄວາມໂປ່ງໃສ, ມີຄວາມຍຸຕິທຳ, ຕັດສິນບັນຫາຢ່າງພາວະວິໄສ, ຖືກຕ້ອງກັບຄວາມເປັນຈິງ ແລະ ເປັນແບບຢ່າງໃນການປະຕິບັດກົດໝາຍ;

4. ມີຄວາມຮູ້, ຄວາມສາມາດ ກ່ຽວກັບວິຊາສະເພາະໃດໜຶ່ງໂດຍມີປະກາສະນີຍະບັດ ແຕ່ຊັ້ນສູງຂຶ້ນໄປ;

5. ໄດ້ຜ່ານການຮໍ່າຮຽນ ຫຼື ການຝຶກອົບຮົມວຽກງານກວດກາລັດ;

6. ມີຄວາມຮູ້ດ້ານພາສາຕ່າງປະເທດໃດໜຶ່ງ ແລະ ຄອມພິວເຕີໃນລະດັບພື້ນຖານຂຶ້ນໄປ;

7. ຮັກສາຄວາມລັບໃນການປະຕິບັດໜ້າທີ່ວິຊາສະເພາະ;

8. ບໍ່ເຄີຍຖືກລົງວິໄນ ຫຼື ບໍ່ເຄີຍຖືກສານຕັດສິນລົງໂທດ ຍ້ອນການກະທຳຜິດໂດຍເຈດຕະນາ;

9. ຖືສັນຊາດລາວໂດຍກຳເນີດ;

10. ມີສຸຂະພາບດີ.

**ມາດຕາ 66 (ໃໝ່) ມາດຕະຖານສະເພາະ ຂອງປະທານ ແລະ ຮອງປະທານ ອົງການກວດກາລັດແຕ່ລະຂັ້ນ**

ນອກຈາກມາດຕະຖານລວມຂອງພະນັກງານ-ລັດຖະກອນກວດກາລັດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 65 ຂອງກົດໝາຍສະບັບນີ້ແລ້ວ, ປະທານ ແລະ ຮອງປະທານ ອົງການກວດກາລັດແຕ່ລະຂັ້ນ ຍັງມີ ມາດຕະຖານສະເພາະ ດັ່ງນີ້:

1. ມີທັດສະນະມະຫາຊົນທີ່ຖືກຕ້ອງ, ຮັບຟັງຄຳເຫັນຂອງມະຫາຊົນ, ຮູ້ເລືອກເຟັ້ນເອົາຄຳເຫັນທີ່ ຖືກຕ້ອງ ມີເຫດຜົນ ຂອງມະຫາຊົນ ແລະ ຮູ້ສະຫຼຸບສັງລວມຕາມຄວາມເປັນຈິງ;

2. ມີຄວາມສາມາດໃນການນຳພາ ຊີ້ນຳ ວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດ ບັງຫຼວງ;

3. ຍຶດໝັ້ນຫຼັກການລວມສູນປະຊາທິປະໄຕ ຢ່າງເຂັ້ມງວດ, ປຶກສາຫາລື ແລະ ຕົກລົງວຽກງານເປັນ ໝູ່ຄະນະ, ເຮັດວຽກຕິດແທດກັບຕົວຈິງ, ກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບ.

## ພາກທີ IV
## ສິດ ແລະ ພັນທະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ

**ມາດຕາ 67 (ປັບປຸງ) ສິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ ມີສິດ ດັ່ງນີ້:

1. ສະເໜີແຈ້ງຂໍ້ຕົກລົງ ກ່ຽວກັບການກວດກາໃຫ້ຕົນຮູ້;

2. ສະເໜີປ່ຽນບຸກຄົນ ໃນຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ທີ່ເຄີຍມີຂໍ້ຂັດແຍ່ງກັບຕົນ;

3. ອະທິບາຍ, ຊີ້ແຈງ ບັນຫາຕ່າງໆ ທີ່ພົວພັນເຖິງເນື້ອໃນການກວດກາ;

4. ປະຕິເສດການສະໜອງຂໍ້ມູນ, ເອກະສານ ທີ່ບໍ່ພົວພັນເຖິງເນື້ອໃນການກວດກາ;

5. ສະເໜີຕໍ່ຜູ້ຕົກລົງໃຫ້ກວດກາ ກ່ຽວກັບການກະທຳຂອງຄະນະກວດກາ ຫຼື ຄະນະກວດກາ ສະເພາະກິດ ແລະ ຜູ້ອື່ນ ທີ່ເຂົ້າຮ່ວມການກວດກາ ຊຶ່ງຕົນເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;

6. ສະເໜີຄຳເຫັນ ກ່ຽວກັບບົດສະຫຼຸບຜົນການກວດກາ;

7. ສະເໜີ ຫຼື ຮ້ອງຟ້ອງໃຫ້ມີການທົດແທນຄ່າເສຍຫາຍ ຖ້າຫາກເຫັນວ່າຕົນໄດ້ຮັບຄວາມເສຍ ປະໂຫຍດຈາກການກວດກາທີ່ບໍ່ຖືກຕ້ອງ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 68 (ປັບປຸງ) ພັນທະຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ ມີພັນທະ ດັ່ງນີ້:

1. ປະຕິບັດຂໍ້ຕົກລົງ ກ່ຽວກັບການກວດກາ, ໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນ, ເອກະສານຢ່າງ ຄົບຖ້ວນ, ຊັດເຈນ ແລະ ທັນເວລາ ຕາມການສະເໜີຂອງ ຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ແລະ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບຂໍ້ມູນ, ເອກະສານ ທີ່ຕົນໄດ້ສະໜອງໃຫ້;

2. ປະຕິບັດວິທີການ ແລະ ມາດຕະການ ຕາມຂໍ້ຕົກລົງແກ້ໄຂຜົນການກວດກາ ຢ່າງຖືກຕ້ອງ, ເຂັ້ມງວດ, ທັນການ;

3. ລາຍງານເປັນລາຍລັກອັກສອນ ກ່ຽວກັບການຈັດຕັ້ງປະຕິບັດການແກ້ໄຂຜົນການກວດກາ ຕໍ່ອົງການກວດກາລັດທີ່ກ່ຽວຂ້ອງ;

4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 69 (ປັບປຸງ) ຂໍ້ຫ້າມ ສຳລັບຄະນະກວດກາ ແລະ ຄະນະກວດກາສະເພາະກິດ

ຫ້າມ ຄະນະກວດກາ ແລະ ຄະນະກວດກາສະເພາະກິດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດທຸກຮູບແບບ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ;

2. ເຂົ້າຮ່ວມການກວດກາ ໃນກໍລະນີເປົ້າໝາຍຖືກກວດກາ ເປັນຍາດພີ່ນ້ອງ, ຄອບຄົວ ແລະ ພັກພວກຂອງຕົນ;

3. ຂໍເອົາ, ທວງເອົາ ຫຼື ຮັບສິນບົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ກວດກາເກີນຂອບເຂດ ຂອງຂໍ້ຕົກລົງ ຫຼື ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການກວດກາ;

5. ບັງຄັບ ແລະ ນາບຂູ່ ເປົ້າໝາຍຖືກກວດກາ;

6. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປົດບັງ, ຊຸກເຊື່ອງ ຫຼື ປົກປ້ອງເປົ້າໝາຍຖືກກວດກາ ແລະ ລາຍງານຂໍ້ມູນກວດກາບໍ່ກົງກັບຄວາມເປັນຈິງ;

7. ເປີດເຜີຍຂໍ້ມູນ ກ່ຽວກັບການກວດກາ ໃນເວລາດຳເນີນການກວດກາໂດຍບໍ່ໄດ້ຮັບອະນຸຍາດ;

8. ໃຫ້ຄຳສັນຍາ ແລະ ພົວພັນກັບເປົ້າໝາຍຖືກກວດກາ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ ເພື່ອຫາຜົນປະໂຫຍດ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 70 ຂໍ້ຫ້າມສຳລັບເປົ້າໝາຍຖືກກວດກາ

ຫ້າມເປົ້າໝາຍຖືກກວດກາ ມີພຶດຕິກຳ ດັ່ງນີ້:

1. ປະຕິເສດການສະໜອງຂໍ້ມູນ, ຫຼັກຖານ, ເອກະສານ ກ່ຽວກັບການກວດກາ;

2. ລາຍງານ, ສະໜອງຂໍ້ມູນ, ຫຼັກຖານ, ເອກະສານ ບໍ່ຖືກກັບຄວາມເປັນຈິງ; ຊຸກເຊື່ອງ, ທຳລາຍເອກະສານ, ວັດຖຸສິ່ງຂອງ ຊຶ່ງເປັນຫຼັກຖານທີ່ພົວພັນເຖິງການກວດກາ;

3. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ ຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ແລະ ຜູ້ເຂົ້າຮ່ວມກວດກາ ຫຼື ຜູ້ລາຍງານ, ຜູ້ສະໜອງຂໍ້ມູນ ໃຫ້ແກ່ການກວດກາ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງກັບການກວດກາ;

4. ຊື້ຈ້າງ, ໃຫ້ສິນບົນ ຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ແລະ ຜູ້ເຂົ້າຮ່ວມ, ຜູ້ສະໜອງຂໍ້ມູນ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງກັບການກວດກາ;

5. ແກ່ຍາວເວລາດຳເນີນການກວດກາ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 71 ຂໍ້ຫ້າມສໍາລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກໍາ ດັ່ງນີ້:

1. ຍຸຍົງ ໃຫ້ມີການກວດກາ ຫຼື ໃຫ້ມີການຕ້ານການກວດກາ;
2. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການກວດກາ;
3. ປົກປິດ, ເຊື່ອງອໍາ ຫຼື ທໍາລາຍຂໍ້ມູນ, ຫຼັກຖານ ກ່ຽວກັບການກວດກາ;
4. ໃຊ້ຄວາມຮຸນແຮງ, ນາບຂູ່ ຫຼື ທໍາຮ້າຍຄະນະກວດກາ, ຄະນະກວດກາສະເພາະກິດ, ຜູ້ລາຍງານ, ຜູ້ສະໜອງຂໍ້ມູນ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງກັບການກວດກາ;
5. ປົກປ້ອງ, ຊຸກເຊື່ອງ ເປົ້າໝາຍຖືກກວດກາ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ການຕິດຕາມ, ກວດກາການເຄື່ອນໄຫວວຽກງານກວດກາລັດ

### ມາດຕາ 72 ການຕິດຕາມ, ກວດກາການເຄື່ອນໄຫວວຽກງານກວດກາລັດ

ການຕິດຕາມ, ກວດກາການເຄື່ອນໄຫວວຽກງານກວດກາລັດ ມີ ດັ່ງນີ້:

1. ການຕິດຕາມ, ກວດກາພາຍໃນ ຊຶ່ງແມ່ນ ການຕິດຕາມ, ກວດກາການເຄື່ອນໄຫວວຽກງານ ກວດກາລັດ ໃນລະບົບການຈັດຕັ້ງຂອງອົງການກວດກາລັດ ແຕ່ລະຂັ້ນ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ດໍາເນີນໄປດ້ວຍດີ, ມີປະສິດທິພາບ, ປະສິດທິຜົນ, ໂປ່ງໃສ ແລະ ຍຸຕິທໍາ;

ອົງການກວດກາລັດແຕ່ລະຂັ້ນ ຕ້ອງກວດກາພາຍໃນ ຢ່າງເປັນປົກກະຕິ.

2. ການຕິດຕາມ, ກວດກາພາຍນອກ ຊຶ່ງແມ່ນ ການຕິດຕາມ, ກວດກາ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງ ຕໍ່ການເຄື່ອນໄຫວວຽກງານຂອງອົງການກວດກາລັດແຕ່ລະຂັ້ນ.

### ມາດຕາ 73 (ປັບປຸງ) ເນື້ອໃນການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານກວດກາລັດ

ການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານກວດກາລັດ ຂອງອົງການກວດກາລັດ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;
2. ການພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ການປະຕິບັດນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ການນໍາໃຊ້ມາດຕະການ ທາງດ້ານກົດໝາຍຕໍ່ເປົ້າໝາຍຖືກກວດກາ;
4. ການນໍາໃຊ້ສິດ ແລະ ການປະຕິບັດໜ້າທີ່ ຂອງອົງການກວດກາລັດແຕ່ລະຂັ້ນ.

## ພາກທີ VII
## ວັນສ້າງຕັ້ງ, ງົບປະມານ, ເຄື່ອງໝາຍ, ເຄື່ອງແບບ, ກາໝາຍ, ບັດກວດກາ ແລະ ຕາປະທັບ

**ມາດຕາ 74 (ປັບປຸງ) ວັນສ້າງຕັ້ງອົງການກວດກາລັດ**

ວັນສ້າງຕັ້ງອົງການກວດກາລັດ ແມ່ນ ວັນທີ 16 ກຸມພາ 1982.

ອົງການກວດກາແຫ່ງລັດ ເປັນຜູ້ຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ ເພື່ອປຸກຈິດສໍານຶກໃຫ້ແກ່ສັງຄົມ ມີສະຕິເຄົາລົບກົດໝາຍ ແລະ ມີສ່ວນຮ່ວມໃນວຽກງານກວດກາລັດ.

**ມາດຕາ 75 (ປັບປຸງ) ງົບປະມານ**

ງົບປະມານ ຂອງອົງການກວດກາແຫ່ງລັດ ແມ່ນ ຫົວໜ່ວຍງົບປະມານຂັ້ນໜຶ່ງ ຂອງງົບປະມານແຫ່ງລັດ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

ງົບປະມານຂອງອົງການກວດກາລັດຂັ້ນໃດ ແມ່ນ ຂຶ້ນກັບງົບປະມານຂອງອົງການບໍລິຫານຂັ້ນນັ້ນ.

ສໍາລັບງົບປະມານ ເພື່ອນໍາໃຊ້ໃນການກວດກາ ຕາມມະຕິກອງປະຊຸມຂອງ ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການຂອງອົງການລັດ, ຕາມຜົນການກວດສອບ ແລະ ການກວດກາແບບກະທັນຫັນນັ້ນ ໃຫ້ສ້າງແຜນຄາດຄະເນງົບປະມານ ສະເໜີລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຫຼວງ ເພື່ອພິຈາລະນາ.

**ມາດຕາ 76 (ປັບປຸງ) ເຄື່ອງໝາຍ, ເຄື່ອງແບບ, ກາໝາຍ ແລະ ບັດກວດກາ**

ອົງການກວດກາລັດ ມີ ເຄື່ອງໝາຍ ແລະ ພະນັກງານ-ລັດຖະກອນກວດກາລັດ ມີເຄື່ອງແບບ, ກາໝາຍ ໂດຍແມ່ນປະທານອົງການກວດກາແຫ່ງລັດ ເປັນຜູ້ຕົກລົງ.

ຄະນະກວດກາຂອງອົງການກວດກາລັດ ມີບັດກວດກາສະເພາະ ທີ່ອອກໃຫ້ໂດຍປະທານອົງການກວດກາແຫ່ງລັດ.

ເຄື່ອງໝາຍ, ເຄື່ອງແບບ, ກາໝາຍ ແລະ ບັດກວດກາ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 77 (ປັບປຸງ) ຕາປະທັບ**

ອົງການກວດກາແຫ່ງລັດ, ອົງການກວດກາລັດແຕ່ລະຂັ້ນ ມີຕາປະທັບສະເພາະຂອງຕົນ.

## ພາກທີ VIII
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 78 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໄດ້ປະກອບສ່ວນ, ຮ່ວມມືໃນການຕິດຕາມ, ກວດກາ, ລາຍງານ, ສະໜອງແຫຼ່ງຂ່າວ, ຂໍ້ມູນ, ຫຼັກຖານຖືກກັບຕົວຈິງ, ທັນເວລາ ໃຫ້ແກ່ການດໍາເນີນການກວດກາ ແລະ ແກ້ໄຂຜົນການກວດກາ ຈະໄດ້ຮັບການປົກປ້ອງ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 79 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ຈະຖືກປະຕິບັດມາດຕະ

ການສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

ສຳລັບພະນັກງານ-ລັດຖະກອນກວດກາລັດ ທີ່ລະເມີດກົດໝາຍ ກໍຈະຖືກມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 80 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ອົງການກວດກາແຫ່ງລັດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 81 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 30 ມີນາ 2023 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການກວດກາລັດ ສະບັບເລກທີ 41/ສພຊ, ລົງວັນທີ 16 ພະຈິກ 2017.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ